ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

29-31 ກໍລະກົດ 2022
ປີທີ 11
ສະບັບທີ 863

## ປະທານສະພາແຫ່ງຊາດ ຕ້ອນຮັບປະທານຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ



(ສພຊ) ວັນທີ 27 ກໍລະກົດຜ່ານມາ, ທີ່ສະພາແຫ່ງຊາດ ສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ໂດ໋ ວັນ ຈ໋ຽນ ເລຂາທິການສູນກາງພັກ, ປະທານຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງພັກ-ລັດ ຫວຽດນາມ ໄດ້ຕາງໜ້າພັກ, ລັດ ແລະ ປະຊາຊົນຫວຽດນາມ ຢ້ຽມຢາມ ສປປລາວ ໃນທ່າມກາງບັນຍາກາດທີ່ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ພວມສະເຫລີມສະຫລອງສອງວັນປະຫວັດສາດຂອງສອງຊາດ ກໍຄື ວັນສ້າງຕັ້ງສາຍພົວພັນການທູດ ລະຫວ່າງ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລາວ-ຫວຽດນາມ ຄົບຮອບ 45 ປີ.

ໃນການພົບປະຄັ້ງນີ້, ສະຫາຍ ໄຊສົມພອນ ພົມວິຫານ ຕີລາຄາສູງຕໍ່ບັນດາຜົນສຳເລັດອັນໃຫຍ່ຫລວງ, ຮອບດ້ານ, ໜ້າສັນລະເສີນຂອງສະຫາຍ ໂດ໋ ວັນ ຈ໋ຽນ ໃນຕະຫລອດໄລຍະຜ່ານມາ ເຖິງວ່າຈະມີການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ເສດຖະກິດໂລກ ແລະ ພາກພື້ນ ມີຫລາຍສິ່ງທ້າທາຍ ແຕ່ພາຍໃຕ້ການນຳພາອັນຖືກຕ້ອງ, ສະຫລາດສ່ອງໃສ, ເດັດດ່ຽວ ຂອງພັກກອມມູນິດຫວຽດນາມ, ອັນມີສະຫາຍເລຂາທິການໃຫຍ່ ຫງວຽນ ຝູ ຈ້ອງ ເປັນຜູ້ນຳໜ້າ, ການບັນຊາທີ່ເຂັ້ມແຂງຂອງລັດຖະບານຫວຽດນາມ, ການຕິດຕາມກວດກາທີ່ເຂັ້ມງວດຂອງສະພາແຫ່ງຊາດ, ການປະຕິບັດສອງໜ້າທີ່ໄປພ້ອມກັນ ທັງຕ້ານພະຍາດໂຄວິດ-19 ທັງຟື້ນຟູເສດຖະກິດ ເຮັດໃຫ້ຫວຽດນາມ ສາມາດຮັກສາຈັງຫວະການພັດທະນາເສດຖະກິດໄດ້ສູງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ, ສະຖຽນນະພາບທາງດ້ານການເມືອງມີຄວາມໜັກແໜ້ນ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມ

ອ່ານຕໍ່ໜ້າ 2

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນກໍລະກົດ



(ສພຊ) ໃນລະຫວ່າງວັນທີ 26-27 ກໍລະກົດຜ່ານມາ, ທີ່ຫ້ອງປະຊຸມຄະນະປະຈຳສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນກໍລະກົດ 2022 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ,

ອ່ານຕໍ່ໜ້າ 2

## ຮຽບຮຽງເນື້ອໃນຮ່າງກົດໝາຍວ່າດ້ວຍວິຈິດສິນ



(ສພຊ) ເພື່ອຮັບປະກັນໃຫ້ແກ່ຮ່າງກົດໝາຍວ່າດ້ວຍວິຈິດສິນ ທີ່ຜ່ານການຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີເນື້ອໃນທີ່ຄົບຖ້ວນ, ຮັດກຸມ ແລະ ສາມາດນຳໃຊ້ໄດ້ຢ່າງຍາວນານ ແລະ ເພື່ອຄົ້ນຄວ້າ ແລະ ເລືອກເຟັ້ນເອົາບັນດາຄຳຄິດຄຳເຫັນຂອງສະມາຊິກສະພາແຫ່ງຊາດ ມາປັບປຸງໃສ່ຮ່າງກົດ

ອ່ານຕໍ່ໜ້າ 3

## ສພຂ ສະຫວັນນະເຂດ ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3



(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີ II ໄດ້ໄຂຂຶ້ນ ແລະ ອັດລົງດ້ວຍຜົນສຳເລັດອັນຈົບງາມ ພາຍຫລັງດຳເນີນມາເປັນເວລາ 3 ວັນເຕັມ 27-29 ກໍລະກົດ 2022 ໂດຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ, ໂດຍການເຂົ້າຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ, ມີທ່ານ ສັນຕິພາບ ພົມວິຫານ ເຈົ້າແຂວງສະຫວັນນະເຂດ, ມີບັນດາການນຳຂັ້ນແຂວງ, ບັນດາ ສສຊ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ); ສສຊ ອາວຸໂສບຳນານ, ບັນດາພະແນກການ, ອົງການທີ່ກ່ຽວຂ້ອງ ພ້ອມດ້ວຍແຂກຖືກເຊີນ.

ໃນໄລຍະດຳເນີນກອງປະຊຸມ

ອ່ານຕໍ່ໜ້າ 3

## ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສປນວ




ໜ້າ 3

## ບຸນຄຸນແຜ່ນດິນຕ້ອງທົດແທນ

ໂດຍ: ທິດດີ

ໃນເວລາດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຜ່ານມາ; ສສຊ ຕັ້ງບັນຫາເລື່ອງເງິນຕາຢູ່ນອກລະບົບ ເຊິ່ງເປັນໜຶ່ງໃນສາເຫດພາໃຫ້ການຂາດແຄນເງິນຕາກະທົບເຖິງການນຳເຂົ້ານ້ຳມັນ ແລະ ສິນຄ້າຈຳເປັນບາງຊະນິດ... ທ້າຍທີ່ສຸດພວກເຮົາກໍພົບຄວາມຫຍຸ້ງຍາກທາງດ້ານເສດຖະກິດ. ມັນມີຫລາຍບັນຫາທັງນອກໂຕ ແລະ ໃນໂຕ ຄືດັ່ງພວກເຮົາຮູ້ນຳກັນແຕ່ມີເລື່ອງໜຶ່ງຕັ້ງຂຶ້ນນັ້ນຄືປະເທດເຮົາຂາດແຄນເງິນຕາຕ່າງປະເທດແທ້ບໍ? ເວົ້າວ່າຂາດແຄນກໍບໍ່ຖືກປານໃດເພາະວ່າໃນຕົວຈິງມີເງິນຢູ່ແຕ່ມັນຢູ່ນອກລະບົບ. ແລ້ວເປັນຫຍັງເງິນຈຶ່ງບໍ່ເຂົ້າສູ່ລະ

ອ່ານຕໍ່ໜ້າ 3


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 5



## ປະທານ...

ແຂງ, ວຽກງານການຕ່າງປະເທດ ໄດ້ຮັບການເປີດກວ້າງ ເຮັດໃຫ້ບົດບາດອິດທິພົນຂອງຫວຽດນາມ ນັບມື້ສູງເດັ່ນຂຶ້ນ ໃນເວທີພາກພື້ນ ແລະ ສາກົນ; ພ້ອມນັ້ນ, ກໍໄດ້ຊົມເຊີຍຜົນການພົບປະສອງຝ່າຍລະຫວ່າງສະຫາຍປະທານສູນກາງແນວລາວສ້າງຊາດ ກັບສະຫາຍປະທານຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ ແລະ ການເຊັນບົດບັນທຶກການຮ່ວມມືຂອງສອງອົງການ (ໄລຍະປີ 2022-2026) ເຫັນວ່າສອງຝ່າຍໄດ້ມີການພົວພັນຮ່ວມມື ແລະ ແລກປ່ຽນບົດຮຽນກ່ຽວກັບວຽກງານເຜົ່າ, ສາສະໜາ, ກົດໝາຍ, ໂຄສະນາ, ຈັດຕັ້ງ-ພະນັກງານ, ຂະບວນການ, ຫ້ອງການ ແລະ ວຽກພົວພັນຕ່າງປະເທດ-ການທູດປະຊາຊົນ, ສອງຝ່າຍໄດ້ມີການຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກໃຫ້ແກ່ບັນດາທ້ອງຖິ່ນ ໂດຍສະເພາະແມ່ນບັນດາທ້ອງຖິ່ນທີ່ມີຊາຍແດນຕິດຈອດກັນເພີ່ມທະວີການຮ່ວມມືໃຫ້ຫລາຍຕື່ມ. ພ້ອມດຽວກັນນີ້, ສອງຝ່າຍຖອດຖອນຍັງໄດ້ບົດຮຽນກ່ຽວກັບນະໂຍບາຍຕໍ່ຄົນເຊື້ອຊາດຫວຽດນາມທີ່ອາໄສຢູ່ຕ່າງປະເທດ ເຊິ່ງເປັນບົດຮຽນອັນດີໃຫ້ແກ່ ສປປລາວ.

ສະຫາຍປະທານສະພາແຫ່ງຊາດລາວ ຍັງໄດ້ກ່າວຕື່ມອີກວ່າ: ເຖິງສະພາບພາກພື້ນ ແລະ ສາກົນ ມີການຜັນແປຢ່າງໄວວາ, ສັບສົນ, ສະພາບພາຍໃນຂອງສອງປະເທດ ມີຄວາມຫຍຸ້ງຍາກບໍ່ໜ້ອຍ ແຕ່ສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລາວ-ຫວຽດນາມ ຍັງສືບຕໍ່ໄດ້ຮັບການເສີມຂະຫຍາຍຢ່າງບໍ່ຢຸດຢັ້ງ ທັງທາງກວ້າງ ແລະ ເລິກ ໃນທຸກໆຂົງເຂດ, ການພົວພັນດ້ານການເມືອງສືບຕໍ່ມີຄວາມໜັກແໜ້ນ, ການຮ່ວມມືດ້ານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ດ້ານການຕ່າງປະເທດ ສືບຕໍ່ໄດ້ຮັບການເສີມຂະຫຍາຍ ມີການຊ່ວຍເຫລືອສະໜັບສະໜູນກັນຕະຫລອດມາ; ການພົວພັນດ້ານເສດຖະກິດ-ການຄ້າ, ການລົງທຶນ, ການສຶກສາ-ວັດທະນະທຳ, ວິທະຍາສາດ ແລະ ອື່ນໆ ກໍຄືການພົວພັນຮ່ວມມື ລະຫວ່າງ ຂະແໜງການສູນກາງ ແລະ ທ້ອງຖິ່ນ ມີບາດກ້າວຂະຫຍາຍຕົວຂຶ້ນເລື້ອຍໆ ເຊິ່ງເປັນການປະກອບສ່ວນສຳຄັນໃຫ້ແກ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ສປປລາວ; ພ້ອມນັ້ນ, ສະຫາຍຍັງໄດ້ຕີລາຄາສູງຕໍ່ການແລກປ່ຽນການຢ້ຽມຢາມຂອງບັນດາສະຫາຍການນຳຂັ້ນສູງ ຂອງພັກ-ລັດ ຂອງສອງປະເທດ ໃນຕະຫລອດໄລຍະຜ່ານມາ; ພ້ອມທັງສະແດງຄວາມຂອບໃຈຕໍ່ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທີ່ໄດ້ໃຫ້ການຊ່ວຍເຫລືອປະຊາຊົນລາວມາຕະຫລອດມາ ທັງໃນໄລຍະຕໍ່ສູ້ປົດປ່ອຍຊາດ ແລະ ທັງໃນໄລຍະປັດຈຸບັນ, ພິເສດແມ່ນການຊ່ວຍເຫລືອສ້າງຫໍສະພາແຫ່ງຊາດລາວຫລັງໃໝ່ ເຊິ່ງເປັນຂອງຂວັນອັນປະເສີດ ຂອງພັກ, ລັດ ແລະ ປະຊາຊົນຫວຽດນາມ ມອບໃຫ້ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ເຊິ່ງເປັນສັນຍາລັກອັນໂດດເດັ່ນ ແຫ່ງການພົວພັນພິເສດ, ຫາຍາກ ຂອງປະຊາຊົນສອງຊາດພວກເຮົາ; ສະເພາະການພົວພັນຮ່ວມມື ລະຫວ່າງສອງອົງການນິຕິບັນຍັດນັ້ນ ປັດຈຸບັນການນຳຂັ້ນສູງຂອງສອງສະພາແຫ່ງຊາດ ໄດ້ມີການແລກປ່ຽນການຢ້ຽມຢາມ ແລະ ໄດ້ເຊັນບົດບັນທຶກການຮ່ວມມື ໄລຍະ 5 ປີ, ສະເພາະສອງອົງການ ໄດ້ມີແຜນຈັດຫລາຍກິດຈະກຳສະຫລອງສອງວັນປະຫວັດສາດນຳກັນ, ມີການແລກປ່ຽນຄະນະຜູ້ແທນນຳກັນຫລາຍຄະນະ ແລະ ຍັງຈະສືບຕໍ່ແລກປ່ຽນຄະນະນຳກັນຕໍ່ຈົນຮອດທ້າຍປີ 2023 ທີ່ຈະມາເຖິງ.

(ສົມນຶກ ແກ້ວໄຊຍະຈັກ)

## ກອງປະຊຸມ...



ກຳມະການຄະນະປະຈຳສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການລາຍງານຜົນສຳເລັດຂອງການພົບປະສອງຝ່າຍ ລະຫວ່າງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ແຫ່ງ ສປປລາວ ກັບກຳມາທິການເສດຖະກິດ ແລະ ກຳມາທິການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ; ຮ່າງແຜນການເຂົ້າຮ່ວມກອງປະຊຸມAPPF ຄັ້ງທີ 30 ຢູ່ຣາຊະອານາຈັກໄທ ໃນລະຫວ່າງວັນທີ 25-29 ຕຸລາ 2022 ແລະ ການຢ້ຽມຢາມສັນຖະວະໄມຕີຣາຊະອານາຈັກໄທຢ່າງເປັນທາງການ ຂອງຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍປະທານສະພາແຫ່ງຊາດ ໃນລະຫວ່າງວັນທີ 29-31 ຕຸລາ 2022 ທີ່ຣາຊະອານາຈັກໄທ; ຮ່າງແຜນກະກຽມເປັນເຈົ້າພາບກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ຂອງສະພາແຫ່ງຊາດລາວ ໃນເດືອນກັນຍາ 2024 ຈາກກຳມາທິການການຕ່າງປະເທດ; ລາຍງານຜົນການເຂົ້າຮ່ວມກອງປະຊຸມລັດຖະບານເປີດກວ້າງ ຄັ້ງທີ I ປີ 2022 ກ່ຽວກັບການຈັດຕັ້ງຜັນຂະຫຍາຍມະຕິຂອງສະພາແຫ່ງຊາດ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຈາກກຳມາທິການແຜນການ, ການເງິນ ແລະ ການກວດສອບ ລາຍງານຜົນແລກປ່ຽນບົດຮຽນກັບສະພາແຫ່ງຊາດ ສສ.ຫວຽດນາມ ຂອງຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ; ລາຍງານການຕິດຕາມກວດກາ 6 ເດືອນທ້າຍປີ 2022 ຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ; ລາຍງານການປະເມີນມູນຄ່າການກໍ່ສ້າງຕຶກສະພາປະຊາຊົນນະຄອນຫລວງວຽງຈັນ ໄລຍະທີ II ກະກຽມສະເໜີເຂົ້າແຜນການລົງທຶນຂອງລັດຖະບານ ປະຈຳປີ 2023; ລາຍງານຜົນການຮຽບຮຽງກົດໝາຍ ຈຳນວນ 5 ສະບັບ ທີ່ຜ່ານການພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX; ຜ່ານຮ່າງມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ ຈາກກຳມາທິການກົດໝາຍ ແລະ ການລາຍງານຂໍທິດຊີ້ນຳກ່ຽວກັບການຄົ້ນຄວ້າການສະເໜີແຕ່ງຕັ້ງ, ຍົກຍ້າຍພະນັກງານສານປະຊາຊົນ ແລະ ອົງການໄອຍະການປະຊາຊົນທ້ອງຖິ່ນ; ການລາຍງານຜົນການຕົກລົງຂອງກອງປະຊຸມຮ່ວມກັບຫລາຍພາກສ່ວນ ຄັ້ງວັນທີ 14 ກໍລະກົດ 2022 ກ່ຽວກັບຄຳຮ້ອງຂໍຄວາມເປັນທຳ ຈຳນວນ 4 ສະບັບ ຈາກກຳມາທິການຍຸຕິທຳ; ພ້ອມນັ້ນ, ບັນດາທ່ານຄະນະປະຈຳສະພາແຫ່ງຊາດ ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມຄົ້ນຄວ້າໃສ່ບັນດາບົດລາຍງານຕ່າງໆ ທີ່ນຳມາລາຍງານໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາທີ່ມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

(ສອນສັກ ວັນວິໄຊ)

## ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ຫອມສະນິດ**

❑ ກະຊວງສຶກສາທິການ ແລະ ກິລາ ໄດ້ເປີດນຳໃຊ້ລະບົບຂໍ້ມູນ-ຂ່າວສານຄຸ້ມຄອງການສຶກສາ ແລະ ຂອງ ສປປລາວ (LESMIS) ເຊິ່ງເປັນລະບົບດີຈີຕອນ ທີ່ຈະຊ່ວຍອຳນວຍຄວາມສະດວກໃນການເຂົ້າເຖິງຂໍ້ມູນດ້ານການສຶກສາ, ວິທະຍາສາດ ແລະ ກິລາ ໃນ ສປປລາວ ຢ່າງວ່ອງໄວ ເພື່ອຊ່ວຍສະໜັບສະໜູນການຕິດຕາມ, ປະເມີນຜົນ ແລະ ກຳນົດນະໂຍບາຍຕ່າງໆຂອງຂະແໜງການ ເຊິ່ງລະບົບ LESMS ຈະເຮັດໜ້າທີ່ເປັນລະບົບຄຸ້ມຄອງຂໍ້ມູນສູນກາງທີ່ຈະຊ່ວຍສະໜອງການເຂົ້າເຖິງຂໍ້ມູນການສຶກສາທັງໝົດໃນ ສປປລາວ, ເປັນລະບົບທີ່ສາມາດເຂົ້າເຖິງໄດ້ຜ່ານທາງອອນລາຍ ແລະ ໃນຮູບແບບແອັບ ໂດຍຂັ້ນສູນກາງ ຫລື ຂັ້ນທ້ອງຖິ່ນ ແລະ ໂຮງຮຽນ.

**ນສພ. ປະເທດລາວ 27/07/2022**

❑ ນັກທ່ອງທ່ຽວຫລັ່ງໄຫລຂ້າມຂົວມິດຕະພາບລາວ-ໄທ ແລະ ຜ່ານຊ່ອງທາງຕ່າງໆຕາມເຂດຊາຍແດນປະເທດເພື່ອນບ້ານໃກ້ຄຽງເພີ່ມຂຶ້ນຢ່າງໜາແໜ້ນ ໂດຍນັກທ່ອງທ່ຽວສ່ວນໃຫຍ່ຈະໃຊ້ຊ່ອງທາງຂີ່ລົດໄຟລາວ-ຈີນ ເພື່ອເດີນທາງໄປພາກເໜືອ ຂອງ ສປປລາວ; ປັດຈຸບັນ, ມີນັກທ່ອງທ່ຽວເດີນທາງເຂົ້າມາລາວ ເພີ່ມ 40%-50% ພາຍຫລັງລັດຖະບານໄດ້ເປີດປະເທດ ແລະ ມີມາດຕະການຜ່ອນຜັນຫລາຍຢ່າງ; ກະຊວງຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ຢືນຢັນວ່າລາວມີລາຍຮັບຈາກການທ່ອງທ່ຽວ ລະຫວ່າງ ປີ 2018-2019 ໂດຍສະເລ່ຍ ປະມານ 600-700 ລ້ານໂດລາ ກັບຈຳນວນນັກທ່ອງທ່ຽວເກືອບ 4 ລ້ານຄົນ ເຊິ່ງໄລຍະນັ້ນເປັນປີທີ່ ສປປລາວ ແລະ ສປຈີນ ໄດ້ເປີດປີທ່ອງທ່ຽວຮ່ວມກັນໂດຍມີນັກທ່ອງທ່ຽວຊາວຈີນ ເຂົ້າມາຢ້ຽມຢາມ ສປປລາວ ເກືອບ 1 ລ້ານຄົນ

**ນສພ. ປະເທດລາວ 28/07/2022**

❑ ວັນທີ 13 ສິງຫາທີ່ຈະມາເຖິງນີ້, ມະຫາວິທະຍາໄລແຫ່ງຊາດ (ມຊ) ຈະໄດ້ສອບເສັງຄັດເລືອກເອົານັກສຶກສາທີ່ຮຽນຈົບ ມ7 ປີນີ້ ຫລື ຈົບໃນປີຜ່ານມາ ເພື່ອເຂົ້າຮຽນ ມຊ ໃນສົກສຶກສາ 2022-2023 ເຊິ່ງ ມຊ ມີແຜນຮັບເອົານັກສຶກສາເຂົ້າຮຽນ 6.990 ຄົນ, ໃນນີ້ ປະລິນຍາຕີ 5.150 ຄົນ, ປະລິນຍາຕີຕໍ່ເນື່ອງ 1.480 ຄົນ, ຫລັກສູດນາໆຊາດຫລັກສູດຄູພາສາຈີນ 210 ຄົນ, ອະນຸປະລິນຍາ 150 ຄົນ, ຄາດວ່າຈະປະກາດຜົນສອບເສັງກ່ອນວັນທີ 12 ກັນຍາ 2022 ແລະ ໃນເດືອນຕຸລາຈະເລີ່ມເຂົ້າຮຽນປົກກະຕິ.

**ນສພ. ປະຊາຊົນ 29/07/2022**

❑ ຄະນະກຳມະການແຮງງານແຫ່ງຊາດ ໄດ້ຕົກລົງ ແລະ ເຫັນດີເປັນເອກະພາບ ໃຫ້ຄົ້ນຄວ້າປັບປຸງເພີ່ມຄ່າແຮງງານຂັ້ນຕໍ່າສຸດ ໃຫ້ຜູ້ອອກແຮງງານທີ່ເຮັດພາກວິສາຫະກິດ ໃນລະບົບ ແລະ ນອກລະບົບ ໃນລາວ ໂດຍໄດ້ສະເໜີເພີ່ມເປັນ 1.557.000 ກີບຕໍ່ຄົນຕໍ່ເດືອນ (ຕໍ່າສຸດທີ່ຜູ້ອອກແຮງງານສາມາດດຳລົງຊີວິດຢູ່ໄດ້) ຜ່ານການປຶກສາຫາລືຮ່ວມກັນຫລາຍຄັ້ງຈຶ່ງເຫັນດີປັບຄ່າແຮງງານຂັ້ນຕໍ່າສຸດ (ໃໝ່) ສຳລັບຜູ້ອອກແຮງງານຢູ່ລາວມີ 2 ຄັ້ງ ຄື:ຄັ້ງທີ 1 ປັບຂຶ້ນຈາກ 1.100.000 ກີບ ມາເປັນ 1.200.000 ກີບຕໍ່ຄົນຕໍ່ເດືອນ ຫລື ເທົ່າກັບ 46.154 ກີບຕໍ່ຄົນຕໍ່ວັນ ເທົ່າກັບ 5.769 ກີບຕໍ່ຊົ່ວໂມງ ເລີ່ມຈັດຕັ້ງປະຕິບັດແຕ່ວັນທີ 1 ສິງຫາ 2022 ຫາ ວັນທີ 30 ເມສາ 2023 ຄັ້ງທີ 2 ປັບຂຶ້ນຈາກ 1.200.000 ກີບມາເປັນ 1.300.000 ກີບຕໍ່ຄົນຕໍ່ເດືອນ ຫລື ເທົ່າກັບ 50.000 ກີບຕໍ່ຄົນຕໍ່ວັນ ເທົ່າກັບ 6.250 ກີບຕໍ່ຊົ່ວໂມງ ເລີ່ມຈັດຕັ້ງປະຕິບັດວັນທີ 1 ພຶດສະພາ 2023 ເປັນຕົ້ນໄປ.

**ນສພ. ວຽງຈັນໃໝ່ 29/07/2022**

## ສຳເລັດ...

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນນະຄອນຫລວງວຽງຈັນ (ສປນວ) ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ໃນວັນທີ 26 ກໍລະກົດ 2022 ທີ່ຫ້ອງປະຊຸມສຳນັກງານອົງການປົກຄອງນະຄອນຫລວງ ໂດຍການເປັນປະທານຂອງທ່ານ ອານຸພາບ ຕຸນາລົມ ຄະນະເລຂາທິການສູນກາງພັກ, ເລຂາຄະນະພັກນະຄອນຫລວງ, ປະທານສະພາປະຊາຊົນນະຄອນຫລວງວຽງຈັນ ເຂົ້າຮ່ວມໂດຍທ່ານ ປອ. ອາດສະພັງທອງ ສີພັນດອນ ຮອງເລຂາຄະນະພັກ, ເຈົ້າຄອງນະຄອນຫລວງວຽງຈັນ ມີບັນດາທ່ານການນຳນະຄອນຫລວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1, ສະມາຊິກສະພາປະຊາຊົນນະຄອນຫລວງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ອານຸພາບ ຕຸນາລົມ ໄດ້ກ່າວວ່າ: ກອງປະຊຸມຄັ້ງນີ້ ໄດ້ດຳເນີນມາເປັນເວລາ 4 ວັນ ເຊິ່ງເຕັມໄປດ້ວຍບັນຍາກາດອັນຟົດຟື້ນ ແຫ່ງການເສີມຂະຫຍາຍສິດປະຊາທິປະໄຕ ໃນການຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຢ່າງມີເຫດຜົນ, ມີເນື້ອໃນທີ່ເລິກເຊິ່ງ, ລະອຽດຄົບຖ້ວນ ມີຄວາມເປັນເອກະພາບສູງ ຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນນະຄອນຫລວງ ໃນຖານະເປັນຕົວແທນຂອງປະຊາຊົນຊາວນະຄອນຫລວງ ໃນການຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຕ່າງໆຂອງນະຄອນຫລວງ ດັ່ງນີ້:

1. ຮັບຮອງເອົາບົດລາຍງານ ຂອງທ່ານເຈົ້າຄອງນະຄອນຫລວງວຽງຈັນ ກ່ຽວກັບຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ເຊິ່ງໄດ້ຕີລາຄາສູງຕໍ່ຄວາມພະຍາຍາມ ຂອງອົງການປົກຄອງນະຄອນຫລວງວຽງຈັນ ທີ່ໄດ້ມີຄວາມພະຍາຍາມ ແລະ ເອົາໃຈໃສ່ສູ້ຊົນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ດ້ວຍຄວາມຮັບຜິດຊອບສູງ ໃນສະພາບທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການແຜ່ລະບາດຂອງພະຍາດໂຄວິດ-19, ການອ່ອນຄ່າຂອງເງິນກີບ, ລາຄາສິນຄ້າ ແລະ ຄ່າຄອງຊີບເພີ່ມສູງຂຶ້ນ, ການສະໜອງນ້ຳມັນເຊື້ອໄຟມີຄວາມຈຳກັດ ເຊິ່ງໄດ້ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ. ເຖິງຢ່າງໃດກໍຕາມອົງການປົກຄອງນະຄອນຫລວງໄດ້ມີຄວາມພະຍາຍາມຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ເຊິ່ງສາມາດຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ເສດຖະກິດ ສືບຕໍ່ເຕີບໂຕ ແລະ ສາມາດປະຄັບປະຄອງເສດຖະກິດ ບໍ່ໃຫ້ເຂົ້າສູ່ວິກິດທີ່ໜັກໜ່ວງ, ສະພາບການພັດທະນາເສດຖະກິດ-ສັງຄົມຄ່ອຍໆຟື້ນຕົວດີຂຶ້ນ ເທື່ອລະກ້າວ;

2. ຮັບຮອງເອົາດ້ານຫລັກການກ່ຽວກັບຮ່າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ຂອງນະຄອນຫລວງວຽງຈັນ. ກອງປະຊຸມມອບໃຫ້ອົງການປົກຄອງ ສືບຕໍ່ປັບປຸງຕາມການປະກອບຄຳເຫັນຂອງກອງປະຊຸມ, ຫລັງຈາກນັ້ນ, ໃຫ້ນຳເອົາຮ່າງແຜນດັ່ງກ່າວສະເໜີຕໍ່ກະຊວງກ່ຽວຂ້ອງ ແລະ ລັດຖະບານ ເພື່ອພິຈາລະນາຕົກລົງແລ້ວຈຶ່ງສືບຕໍ່ຄົ້ນຄວ້າເປັນຂໍ້ຕົກລົງ ຫລື ນິຕິກຳຂອງອົງການປົກຄອງ ເພື່ອສະເໜີ ສປນວ ນຳເຂົ້າພິຈາລະນາໃນກອງປະຊຸມຄັ້ງຕໍ່ໄປ;

3. ຮັບຮອງເອົາບົດລາຍງານຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງ ສປນວ. ກອງປະຊຸມສະແດງຄວາມຊົມເຊີຍ ແລະ ເປັນເອກະພາບ ກັບບັນດາຜົນງານ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ທີ່ໄດ້ລາຍງານຕໍ່ກອງປະຊຸມ. ພ້ອມທັງຮຽກຮ້ອງໃຫ້ຄະນະປະຈຳສະພາປະຊາຊົນ, ຄະນະກຳມະການ ແລະ ສະມາຊິກສະພາປະຊາຊົນ ຈົ່ງໄດ້ສືບຕໍ່ເປັນເຈົ້າການຈັດຕັ້ງຜັນຂະຫຍາຍແຜນການ 6 ເດືອນທ້າຍປີ 2022 ໃຫ້ບັນລຸຄາດໝາຍຕ່າງໆ ໂດຍສະເພາະ 3 ພາລະບົດບາດຕົ້ນຕໍຂອງສະພາປະຊາຊົນ ເພື່ອຍົກສູງຄຸນນະພາບ ແລະ ສ້າງຄວາມເຊື່ອໝັ້ນຕໍ່ການຈັດຕັ້ງປະຕິບັດພາລະບົດບາດຂອງສະພາປະຊາຊົນ ໃຫ້ນັບມື້ນັບພົ້ນເດັ່ນສູງຂຶ້ນ;

4. ຮັບຮອງເອົາການສະເໜີແຕ່ງຕັ້ງທ່ານ ສົມບູນ ອາຄະວົງສາ ເປັນຫົວໜ້າຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ແລະ ທ່ານ ວົງໄຊ ພົມມີໄຊ ເປັນຫົວໜ້າພະແນກການຕ່າງປະເທດ ນະຄອນຫລວງວຽງຈັນ.

5. ຮັບຟັງການລາຍງານ, ຊີ້ແຈງ ບາງວຽກງານສຳຄັນພື້ນຖານຂອງນະຄອນຫລວງວຽງຈັນ ດັ່ງນີ້:

1). ບັນຫາການຄວບຄຸມລາຄາສິນຄ້າ, ແຜນການຄຸ້ມຄອງລາຄາສິນຄ້າໃນອະນາຄົດ ແລະ ການສົ່ງເສີມການຜະລິດ ເປັນສິນຄ້າພາຍໃນ;

2). ບັນຫາຄວາມຊັກຊ້າການຈັດຕັ້ງປະຕິບັດໂຄງການ ກໍ່ສ້າງເສັ້ນທາງແຕ່ບ້ານດອນນົກຂຸ້ມຫາບ້ານສ້າງເຫວີຍ ແລະ ບ້ານດົງສະຫວາດ;

3). ບັນຫານ້ຳຖ້ວມຂັງ ຈາກໂຄງການກໍ່ສ້າງເສັ້ນທາງເລກທີ 13 ເໜືອ, ໂຄງການກໍ່ສ້າງເສັ້ນທາງດ່ວນວຽງຈັນ-ວັງວຽງ ແລະ ໂຄງການທາງລົດໄຟລາວ-ຈີນ ໃນຂອບເຂດເມືອງນາຊາຍທອງ;

4). ບັນຫາການຊົດເຊີຍທີ່ດິນ ໃຫ້ແກ່ຜູ້ຖືກຜົນກະທົບຈາກໂຄງການທ່າບົກ-ທ່ານາແລ້ງ ແລະ ເຂດໂລຈິສຕິກ;

5). ບັນຫາການຈັດຕັ້ງປະຕິບັດໂຄງການນ້ຳເປື້ອນນະຄອນຫລວງວຽງຈັນ ພາຍໃຕ້ເງິນກູ້ລັດຖະບານຮົງກາລີ;

6). ບັນຫາການແກ້ໄຂການອອກໃບຕາດິນຊັກຊ້າ ຕາມທາງສຽງຂອງປະຊາຊົນ;

7). ບັນຫາການລົບລ້າງໃບຕາດິນ ຈຳນວນ 17 ຕອນ ບຶງສາລາຄຳ, ເຂດສຳປະທານຂອງບໍລິສັດມິດຕະພາບການກະເສດ;

8). ຮັບຟັງການລາຍງານ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ຕາມຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫລວງວຽງຈັນ ສະບັບເລກທີ 841/ຈນວ, ລົງວັນທີ 25 ຕຸລາ 2021, ໂດຍລົງເລິກ 6 ວຽກຈຸດສຸມຕາມສິດ ແລະ ໜ້າທີ່ຂອງຕົນ ແລະ ການດຳເນີນຄະດີຢາເສບຕິດ; ບັນຫາກ່ຽວກັບການແກ້ໄຂບັນຫາກອງທຶນຢາເສບຕິດ ນະຄອນຫລວງວຽງຈັນ; ບັນຫາການຄຸ້ມຄອງຄົນຕ່າງປະເທດ ຢູ່ນະຄອນຫລວງວຽງຈັນ;

9). ຮັບຟັງການລາຍງານ ການຕິດຕາມກວດກາການນຳໃຊ້ 7 ມາດຕະການສະກັດກັ້ນ ຂອງອົງການສືບສວນ-ສອບສວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 136 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ໂດຍສະເພາະການແກ້ໄຂການລະເມີດກົດໝາຍໃນການພາງຕົວ, ກັກຕົວ ແລະ ການກັກຂັງພາງ ທີ່ບໍ່ຖືກຕ້ອງຕາມກົດໝາຍ ໃນໄລຍະ 6 ເດືອນຕົ້ນປີ 2022 ຂອງອົງການໄອຍະການປະຊາຊົນນະຄອນຫລວງ;

10). ຮັບຟັງການລາຍງານ ຂອງອົງການໄອຍະການປະຊາຊົນນະຄອນຫລວງ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ຕາມຂໍ້ຕົກລົງ ຂອງເຈົ້າຄອງນະຄອນຫລວງວຽງຈັນ ສະບັບເລກທີ 841/ຈນວ, ລົງວັນທີ 25 ຕຸລາ 2021. ໂດຍລົງເລິກການດຳເນີນຄະດີຢາເສບຕິດ ຢູ່ນະຄອນຫລວງ;

11). ຮັບຟັງການລາຍງານ ຂອງສານປະຊາຊົນນະຄອນຫລວງ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ຕາມຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫລວງວຽງຈັນ ສະບັບເລກທີ 841/ຈນວ, ລົງວັນທີ 25 ຕຸລາ 2021, ໂດຍລົງເລິກການພິຈາລະນາຕັດສິນຄະດີຢາເສບຕິດ;

12). ຮັບຟັງການລາຍງານ ຂອງພະແນກຍຸຕິທຳ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ຕາມຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫລວງວຽງຈັນ ສະບັບເລກທີ 841/ຈນວ, ລົງວັນທີ 25 ຕຸລາ 2021 ລົງເລິກການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງກັບຢາເສບຕິດ.

ຕໍ່ບັນຫາທີ່ໄດ້ມີການລາຍງານ ແລະ ຊີ້ແຈງ ທີ່ກ່າວມາຂ້າງເທິງນັ້ນ, ກອງປະຊຸມຮຽກຮ້ອງໃຫ້ອົງການປົກຄອງນະຄອນຫລວງວຽງຈັນ, ພະແນກການ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ສືບຕໍ່ຈັດຕັ້ງປະຕິບັດບັນດາເນື້ອໃນວິທີການ, ມາດຕະການໃນການຈັດຕັ້ງປະຕິບັດ ແລະ ແກ້ໄຂບັນດາບັນຫາຕ່າງໆທີ່ໄດ້ລາຍງານ, ຊີ້ແຈງແຕ່ລະຫົວຂໍ້ ແລະ ໃຫ້ຄຳໝັ້ນສັນຍາ ໃນກອງປະຊຸມຄັ້ງນີ້ ໃຫ້ມີປະສິດທິຜົນ ແລະ ມີຜົນສັກສິດ.

## ຮຽນຮຽງ...

ໝາຍສະບັບດັ່ງກ່າວ. ໃນລະຫວ່າງວັນທີ 22-23 ກໍລະກົດຜ່ານມາ, ທີ່ສະພາແຫ່ງຊາດ ໄດ້ຈັດກອງປະຊຸມຮຽນຮຽງເນື້ອໃນຮ່າງກົດໝາຍວ່າດ້ວຍວິຈິດສິນ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ; ທ່ານ ປອ. ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ; ທ່ານ ນາງ ມະນີວັນ ເຍຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ; ທ່ານ ວັນສີ ກົວມົວ ຮອງລັດຖະມົນຕີກະຊວງຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ; ຕາງໜ້າບັນດາກົມຂອງກຳມາທິການ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໂອກາດດັ່ງກ່າວ, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ: ໂດຍປະຕິບັດຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021 ເຊິ່ງການຮຽນຮຽງເນື້ອໃນຂອງກົດໝາຍວ່າດ້ວຍວິຈິດສິນ ທີ່ໄດ້ຜ່ານການຄົ້ນຄວ້າ, ປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດ ໃນຄັ້ງວັນທີ 4 ກໍລະກົດ 2022 ເຊິ່ງໄດ້ມີສະມາຊິກສະພາແຫ່ງຊາດປະກອບຄຳເຫັນຈຳນວນຫລາຍ ແລະ ໄດ້ຜ່ານການພິຈາລະນາຮັບຮອງເອົາ ໃນຄັ້ງວັນທີ 7 ກໍລະກົດ 2022 ຕໍ່ກັບຄຳເຫັນຂອງສະມາຊິກສະພາແຫ່ງຊາດ ທີ່ກອງເລຂາໄດ້ສັງລວມມາມີທັງໝົດ138 ເນື້ອໃນ, ກວມເອົາ 50 ມາດຕາ ເຊິ່ງໃນນີ້ບາງບັນຫາທ່ານຮອງລັດຖະມົນຕີກະຊວງຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ກໍໄດ້ຊີ້ແຈງໃນທີ່ປະຊຸມແລ້ວ.

ກອງປະຊຸມ, ໄດ້ສຸມໃສ່ຄົ້ນຄວ້າ, ວິໄຈ ຢ່າງເລິກເຊິ່ງ ແລະ ເລືອກເຟັ້ນເອົາຄຳເຫັນຂອງສະມາຊິກສະພາແຫ່ງຊາດທີ່ມີເຫດມີຜົນມາປັບປຸງໃສ່ເນື້ອໃນຂອງກົດໝາຍ ໃຫ້ມີຄວາມລະອຽດ, ຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງ ກ່ອນນຳສະເໜີຕໍ່ປະທານສະພາແຫ່ງຊາດລົງລາຍເຊັນ ແລະ ສະເໜີຫາປະທານປະເທດ ແຫ່ງ ສປປລາວ ອອກລັດຖະດຳລັດປະກາດໃຊ້ຢ່າງເປັນທາງການ.

(ອານຸສອນ ພູມມີທອນ)

## ສພຂ...

ບັນດາທ່ານ ສສຊ ແລະ ສສຂ ໄດ້ຮັບຟັງການລາຍງານໂດຍສັງເຂບຂອງທ່ານເຈົ້າແຂວງໆສະຫວັນນະເຂດ ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022; ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022; ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022; ລາຍງານກ່ຽວກັບການຄຸ້ມຄອງການຂຸດຄົ້ນແຮ່ທາດ ພາຍໃນແຂວງສະຫວັນນະເຂດ; ລາຍງານກ່ຽວກັບການປັບປຸງຄຸນນະພາບລະບົບການຮຽນ-ການສອນ ທຸກຊັ້ນທຸກສາຍ ໃນໄລຍະໃໝ່; ລາຍງານກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ລາຍງານກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ລາຍງານກ່ຽວກັບການປະຕິບັດພາລະບົດບາດຕິດຕາມກວດ ກາທົ່ວໄປ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ; ລາຍງານກ່ຽວກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການຕັດສິນຄະດີແພ່ງ, ຄະດີອາຍາ, ກົນໄກການປະສານສົມທົບ ໃນການດຳເນີນຄະດີຂອງສານປະຊາຊົນແຂວງ, ເຂດ ໂດຍຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ; ລາຍງານກ່ຽວກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດວຽກງານທະບຽນສານ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດໃນໄລຍະຜ່ານມາ ພ້ອມທັງລາຍງານ ກ່ຽວກັບການຂຶ້ນບັນຊີເຕົ້າໂຮມຊັບສິນ ທີ່ສານຕັດສິນຮິບເປັນຂອງລັດ ໃນໄລຍະຜ່ານມາ; ລາຍງານກ່ຽວກັບການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ໃນໄລຍະຜ່ານມາ ໂດຍສະເພາະຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງທົ່ວແຂວງສະຫວັນນະເຂດ ແລະ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຮັບຮອງເອົາແຜນຈັດສັນທີ່ດິນເບື້ອງຕົ້ນຂອງແຂວງສະຫວັນນະເຂດ ຮອດປີ 2025. ພ້ອມນັ້ນ, ບັນດາທ່ານ ສສຊ ແລະ ສສຂ ໄດ້ສຸມຄວາມຮູ້ຄວາມສາມາດ ເຂົ້າໃນການຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຢ່າງມີເຫດຜົນ, ມີເນື້ອໃນເລິກເຊິ່ງ ສ່ອງແສງໃຫ້ເຫັນເຖິງຄວາມຮັບຜິດຊອບ ໃນການຈັ້ດຕັ້ງປະຕິບັດພາລະບົດບາດ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າໃນແຂວງສະຫວັນນະເຂດ.

ກອງປະຊຸມ ຍັງໄດ້ຮັບຟັງການລາຍງານ, ການປະກອບຄຳເຫັນຂອງຄະນະປະຈຳສະພາປະຊາຊົນແຂວງ, ການຊັກຖາມກັບທີ່ຂອງຜູ້ແທນຢ່າງເລິກເຊິ່ງ, ຄົບຖ້ວນລວມໄປເຖິງການຊີ້ແຈງບັນຫາສຳຄັນຕໍ່ຄຳຊັກຖາມຂອງອົງການປົກຄອງແຂວງ, ຫົວໜ້າອົງການໄອຍະການປະຊາຊົນແຂວງ, ປະທານສານປະຊາຊົນແຂວງ, ບັນດາພະແນກການ ແລະ ກົມກອງທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ.

ຜ່ານການຄົ້ນຄວ້າ ແລະ ປະກອບຄຳເຫັນແຕ່ລະບັນຫາທີ່ໄດ້ນຳເຂົ້າໃນກອງປະຊຸມຄັ້ງນີ້ ກອງປະຊຸມຕົກລົງດັ່ງນີ້:

1. ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາການລາຍງານໂດຍສັງເຂບຂອງທ່ານເຈົ້າແຂວງໆສະຫວັນນະເຂດ ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ, ທິດທາງແຜນການ 6 ເດືອນທ້າຍປີ 2022;

2. ໄດ້ພິຈາລະນາ, ຮັບຮອງເອົາການປະເມີນບ້ານເຂດຫ່າງໄກສອກຫລີກ ແລະ ທຸລະກັນດານ ຂອງອົງການປົກຄອງແຂວງ;

3. ພິຈາລະນາ, ຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາປະຊາຊົນແຂວງ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາ ກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II.

(ກົງທະນູຄຳ ພິພັດເສລີ)

## ບຸນຄຸນ...

ບົບ? ເລື່ອງນີ້ພາກສ່ວນກ່ຽວຂ້ອງເພິ່ນຮູ້ບັນຫາ ແລະ ຊອກຫາທາງແກ້ໄຂແລ້ວ? ແຕ່ໃນທີ່ນີ້ພວກເຮົາຢາກຮູ້ວ່າ: ຜູ້ຄອບຄອງເງິນຕາຕ່າງປະເທດຮູ້ສຶກແນວໃດ? ຕໍ່ປະເທດຊາດບ້ານເມືອງ....ຂໍແລກປ່ຽນເນີ ມີປະເທດຊາດມີແຜ່ນດິນເກີດພວກເຮົາຈຶ່ງຢູຖ່າງທຳມາຫາກິນ, ມີຄວາມສະຫງົບຍ້ອນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບເຮົາເຂັ້ມແຂງ, ປະເທດຊາດໄດ້ຮັບເອກະລາດຍ້ອນມີບັນພະບູລຸດລຸ້ນກ່ອນຕໍ່ສູ້ ແລະ ປົກປັກຮັກສາສືບທອດມາສູ່ລຸ້ນເຮົາ ບຸນຄຸນນີ້ຕ້ອງຕອບແທນ

ການຕອບແທນບຸນຄຸນນີ້ມີຫລາຍຢ່າງຮ້ອຍອັນພັນແນວ ແຕ່ໃນຍາມປະເທດຊາດພົບຄວາມຫຍຸ້ງຍາກທາງດ້ານການເງິນແບບນີ້ ຜູ້ຄອບຄອງເງິນຕາຕ່າງປະເທດຈະຊ່ວຍປະເທດຊາດຫຍັງແດ່? ພໍໃຫ້ສັງຄົມຊື່ນໃຈ ແລະ ຮູ້ວ່າໃນຍາມຫຍຸ້ງຍາກແນວນີ້ ຍັງມີຂະບວນການຕອບແທນແຜ່ນດິນເກີດ.

ຢາກໃຫ້ມີການລຸກຂຶ້ນມາສ້າງຂະບວນການໃດໜຶ່ງ ເພື່ອຮີບໂຮມເງິນຕາຕ່າງປະເທດໃຫ້ເຂົ້າສູ່ລະບົບ. ອາດຈະດ້ວຍຮູບການສ້າງບຸນທຳທານຜ້າປ່າສາມັກຄີຄືດັ່ງພວກເຮົາສ້າງວັດວາອາຣາມ; ສ້າງພະພຸດທະຮູບອົງສັກສິດ ຄິດວ່າຄົງເປັນບຸນກຸສົນຢ່າງຍິ່ງແກ່ຕົນເອງ ແລະ ວົງຕະກຸນ ກໍຄືປະເທດຊາດ.

ຕ້ອງຍອມຮັບວ່າຖ້າບໍ່ມີແຜ່ນດິນເກີດ; ບໍ່ມີປະເທດຊາດ ພວກເຮົາຈະຢູ່ສັນຕິສຸກໄດ້ຢ່າງໃດ ແລ້ວພວກເຮົາຄິດແນວໃດ? ຮັ່ງມີ-ລ້ຳລວຍແຕ່ປະເທດຊາດທີ່ຕົນອາໃສຢູ່ພົບຄວາມຫຍຸ້ງຍາກ; ປະຊາຊົນສ່ວນຫລາຍພົບຄວາມລຳບາກກາກຳ ຍ້ອນການຜັນແປຂອງອັດຕາແລກປ່ຽນ ເຖິງແມ່ນວ່າຈະເປັນວິກິດຊົ່ວຄາວກໍຕາມ.

# ສະຫະພັນແມ່ຍິງຮາກຖານ ສພຂ ຜົ້ງສາລີ ເລົ່າຄືນມູນວັນສ້າງຕັ້ງແມ່ຍິງລາວ

(ສພຊ) ຕອນບ່າຍວັນທີ 19 ກໍລະກົດ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ, ຈັດພິທີປາຖະກະຖາວັນສ້າງຕັ້ງແມ່ຍິງລາວ ຄົບຮອບ 67 ປີ (20/7/1955-20/7/2022) ໂດຍການເປັນປະທານຂອງສະຫາຍ ນາງ ບົວອອນ ຈັນທະລັງ ປະທານສະຫະພັນແມ່ຍິງຮາກຖານ ສພຂ; ເຂົ້າຮ່ວມໂດຍສະຫາຍ ພັທ. ຄໍາດາ ໂສລະພົມ ຮອງເລຂາໜ່ວຍພັກ ສພຂ, ຜູ້ຊີ້ນໍາອົງການຈັດຕັ້ງມະຫາຊົນ; ມີບັນດາສະມາຊິກສະຫະພັນແມ່ຍິງຮາກຖານ ສພຂ ເຂົ້າຮ່ວມ.

ໃນພິທີ, ຮັບຟັງສະຫາຍ ນາງ ບົວອອນ ຈັນທະລັງ ເລົ່າຄືນມູນເຊື້ອການກໍາເນີດ, ເຕີບໃຫຍ່ຂະຫຍາຍຕົວ ແລະ ຜົນງານການເຄື່ອນໄຫວຂອງອົງການຈັດຕັ້ງສະພັນແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າທີ່ໄດ້ອຸທິດຕົນເພື່ອພາລະກິດຕໍ່ສູ້ປົດປ່ອຍຊາດ ແລະ ປົກປັກຮັກສາພັດທະນາປະເທດຊາດ ກໍຄືພາລະກິດພັດທະນາແມ່ຍິງ ຕະຫລອດໄລຍະ 67 ປີ ທີ່ຜ່ານມາ ເຊິ່ງມີບາງຕອນສະຫາຍໄດ້ກ່າວວ່າ: "ພາຍໃຕ້ການນໍາພາຂອງພັກ ແລະ ໄດ້ຮັບຜົນສະທ້ອນຈາກຂະບວນການຕໍ່ສູ້ປະຕິວັດຂອງແມ່ຍິງໃນໂລກ ທີ່ເລັ່ງທວງໃຫ້ປະຕິບັດສິດເສລີພາບ, ຄວາມສະເໝີພາບລະຫວ່າງຍິງ-ຊາຍທາງດ້ານການເມືອງ-ເສດຖະກິດ, ວັດທະນະທໍາ-ສັງຄົມເທື່ອລະກ້າວ. ອົງການຈັດຕັ້ງແມ່ຍິງ



ຂັ້ນຮາກຖານຈຶ່ງໄດ້ເກີດຂຶ້ນ ໂດຍເລີ່ມຈາກການຈັດຕັ້ງໜ່ວຍແມ່ຍິງນັກຮົບ ຢູ່ຊົນນະບົດ, ໜ່ວຍສຸວັນນາລີ ຢູ່ຕາມຕົວເມືອງ, ການຈັດຕັ້ງດັ່ງກ່າວໄດ້ເຄື່ອນໄຫວ ແລະ ເຕີບໃຫຍ່ຂະຫຍາຍຕົວນັບມື້ນັບກວ້າງຂວາງ ແລະ ມາໃນວັນທີ 20 ກໍລະກົດ 1955 ພັກໄດ້ຈັດຕັ້ງໜ່ວຍຄົ້ນຄວ້າວຽກງານແມ່ຍິງຂຶ້ນຢ່າງເປັນທາງການ (ເຊິ່ງເປັນຕົ້ນກໍາເນີດຂອງອົງການຈັດຕັ້ງສະຫະພັນແມ່ຍິງລາວໃນປະຈຸບັນ) ແຕ່ງຕັ້ງຄະນະໜ່ວຍເຊິ່ງປະກອບມີ 3 ທ່ານຄື: ທ່ານນາງ ຄໍາຫລ້າ ວົງສັກ ເປັນຫົວໜ້າ; ທ່ານ ນາງ ຄໍາສຸກ ວົງວິຈິດ ເປັນຮອງຫົວໜ້າ; ທ່ານ ນາງ ຄໍາແພງ ບຸບຜາ ເປັນກໍາມະການ; ເພື່ອສືບຕໍ່ນໍາພາອົງການຈັດຕັ້ງແມ່ຍິງ ແລະ ຂົນຂວາຍຂະບວນການແມ່ຍິງທົ່ວປະເທດ".

ໂອກາດດຽວກັນນີ້, ສະຫາຍ ພັທ. ຄໍາດາ ໂສລະພົມ ຍັງໄດ້ໃຫ້ກຽດໂອ້ລົມຕໍ່ສະຫະພັນແມ່ຍິງຮາກຖານ ສພຂ ເຊິ່ງສະຫາຍກໍໄດ້ກ່າວສະແດງຄວາມຮູ້ບຸນຕໍ່ສະຫະພັນແມ່ຍິງລາວໃນອະດີດ ທີ່ໄດ້ອຸທິດຕົນເພື່ອພາລະກິດຕໍ່ສູ້ປົດປ່ອຍຊາດ ແລະ ປົກປັກຮັກສາພັດທະນາປະເທດຊາດ ຄຽງບ່າຄຽງໄຫລ່ຮ່ວມກັບເພດຊາຍໂດຍຕະຫຼອດມາ. ພ້ອມກັນນັ້ນ, ສະຫາຍຍັງໄດ້ຮຽກຮ້ອງໃຫ້ສະຫະພັນແມ່ຍິງຮາກຖານ ສພຂ ສືບຕໍ່ພາລະກິດດັ່ງກ່າວ ແລະ ເອົາໃຈໃສ່ຄົ້ນຄວ້າຮໍ່າຮຽນເອົາບົດຮຽນອັນດີງາມຂອງແມ່ຍິງລາວ ໂດຍສະເພາະ ຄວາມດຸໝັ່ນຂະຫຍັນພຽນໃນການອອກແຮງງານ, ນໍ້າໃຈເສຍສະຫລະ, ຄວາມເອື້ອເຟືອເພື່ອແຜ່, ຄວາມຮັກແພງຊ່ວຍເຫລືອເຊິ່ງກັນແລະກັນ, ຄວາມສາມັກຄີເປັນຈິດໜຶ່ງໃຈດຽວກັນ, ກິລິຍາມາລະຍາດ, ການຮັກສາມູນມໍລະດົກ ແລະ ອະນຸລັກຮັກສາວັດທະນະທໍາອັນດີງາມຂອງຊາດ ເປັນຕົ້ນແມ່ນການນຸ່ງຖື, ການແຕ່ງກາຍ, ການພົວພັນໃນຄອບຄົວ-ສັງຄົມ ແລະ ອື່ນໆ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ສພຂ ຫລວງນໍ້າທາ ມອບ-ຮັບ ແລະ ອົບຮົມກ່ຽວກັບການຄຸ້ມຄອງ, ນໍາໃຊ້ເວັບໄຊທາງການ ແລະ ໂປຣແກຣມລົງຄະແນນສຽງ

(ສພຊ) ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫລວງນໍ້າທາ ໄດ້ຈັດພິທີມອບ-ຮັບ ແລະ ເຝິກອົບຮົມກ່ຽວກັບການຄຸ້ມຄອງ, ນໍາໃຊ້ເວັບໄຊ້ທາງການ ແລະ ໂປຣແກຣມລົງຄະແນນສຽງໃນກອງປະຊຸມ ສພຂ ຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນທີ 15 ກໍລະກົດ 2022 ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ມີໄຊ ມີວິໄລ ເລຂາທິການ ສພຂ ແລະ ທ່ານ ພູນແກ້ວ ເຫລົ່າອິນ ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ, ມີຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ວິຊາການທັງສອງພາກສ່ວນທີ່ກ່ຽວຂ້ອງພາຍໃນ ສພຂ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ເຂົ້າຮ່ວມ 20 ກວ່າທ່ານ.



ໃນພິທີໄດ້ຮັບຟັງຂໍ້ຕົກລົງຂອງຄະນະເລຂາທິການ ສພຂ ຫລວງນໍ້າທາເລກທີ 427/ຄລຂ.ສພຂ, ລົງວັນທີ 13 ກໍລະກົດ 2022 ວ່າດ້ວຍການອານຸມັດຈັດພິທີມອບ-ຮັບ ແລະ ເຝິກອົບຮົມກ່ຽວກັບການຄຸ້ມຄອງ, ນໍາໃຊ້ເວັບໄຊທາງການ ແລະ ໂປຣແກຣມລົງຄະແນນສຽງໃນກອງປະຊຸມ ສພຂ.

ທ່ານ ມີໄຊ ມີວິໄລ ໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ ທ່ານໃຫ້ຮູ້ເຖິງຄວາມໝາຍຄວາມສໍາຄັນຂອງວຽກງານໄອທີຕໍ່ກັບການໝູນໃຊ້ເຂົ້າໃນຈັດຕັ້ງປະຕິບັດວຽກງານ ແລະ ຮຽກຮ້ອງໃຫ້ສໍາມະນາກອນທຸກທ່ານຈົ່ງຕັ້ງໃຈຮັບຟັງ, ຮໍ່າຮຽນເອົາຄວາມຮູ້ກ່ຽວກັບວຽກງານໄອທີຈາກນັກສໍາມະນາກອນ, ເຮັດໃຫ້ພິທີເຝິກອົບຮົມໄດ້ຮັບຜົນສໍາເລັດຕາມຄາດໝາຍ ເພື່ອນໍາເອົາໂປຣແກຣມລົງຄະແນນສຽງໃນກອງປະຊຸມ ໝູນໃຊ້ເຂົ້າໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ທີ່ຈະໄຂຂຶ້ນໃນຕໍ່ໜ້າ; ໂອກາດດຽວກັນທ່ານ ພູນແກ້ວ ເຫລົ່າອິນ ກໍາມະການພັກແຂວງ ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ໄດ້ມີຄໍາເຫັນກ່າວມອບໂປແກຣມລົງຄະແນນສຽງໃນກອງປະຊຸມ ແລະ ກ່າວຮັບຂອງທ່ານ ມີໄຊ ມີວິໄລ ກໍາມະການຄະນະປະຈໍາ ເລຂາທິການສະພາປະຊາຊົນແຂວງ ແລະ ໄດ້ເຊັນບົດບັນທຶກຮ່ວມມອບ-ຮັບໂປຣແກຣມການລົງຄະແນນສຽງ ເພື່ອນໍາໃຊ້ໂປຣແກຣມຢ່າງເປັນທາງການ.

ວາລະດຽວກັນ, ວິທະນາກອນ ແລະ ສໍາມະນາກອນໄດ້ຮ່ວມເຝິກອົບຮົມໃນຫົວຂໍ້ກ່ຽວກັບການຄຸ້ມຄອງ ແລະ ນໍາໃຊ້ເວບໄຊທາງການຂອງ ສພຂ ແລະ ໃນຫົວຂໍ້ການຕິດຕັ້ງ ແລະ ນໍາໃຊ້ໂປຣແກຣມລົງຄະແນນສຽງ, ການລົງທະບຽນແບບອອນລາຍໃນກອງປະຊຸມ ສພຂ ສໍາມະນາກອນ ຍັງໄດ້ປະຕິບັດຕົວຈິງ ແລະ ແລກປ່ຽນສົນທະນາເຊິ່ງກັນ ແລະ ກັນຢ່າງເປັນຂະບວນຟົດຟື້ນ ເພື່ອນໍາເອົາຄວາມຮູ້ທີ່ໄດ້ຮຽນມາໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນປະໂຫຍດສູງສຸດ.

# ຄະນະປະຈໍາ ສພຂ ຈໍາປາສັກ ຄົ້ນຄວ້າຫລາຍບັນຫາສໍາຄັນ



(ສພຊ) ໃນຕອນເຊົ້າຂອງວັນທີ 13 ກໍລະກົດ 2022 ກອງປະຊຸມຄະນະປະຈໍາສະພາປະຊາຊົນແຂວງ (ສພຂ) ຈໍາປາສັກ ປະຈໍາເດືອນມິຖຸນາ 2022 ໄດ້ໄຂຂຶ້ນຢູ່ຫ້ອງປະຊຸມຂອງ ສພຂ ຈໍາປາສັກ ໂດຍການເປັນປະທານຂອງທ່ານ ແກ້ວລັດຕະນະ ສີຫາວົງ ຮອງປະທານຄະນະປະຈໍາ ສພຂ, ມີທ່ານ ສົມສີ ມະນີນິນ ຮອງປະທານຄະນະປະຈໍາ ສພຂ ແລະ ບັນດາທ່ານໃນຄະນະປະຈໍາ ສພຂ, ຮອງປະທານຄະນະກໍາມະການ, ຄະນະເລຂາທິການ ແລະ ພະນັກງານວິຊາການເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບການເຄື່ອນໄຫວວຽກງານຂອງ ສພຂ ໃນໄລຍະປະຈໍາການ ຊ່ວງປະທານ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX, ລາຍງານກ່ຽວກັບສະພາບການກະກຽມຄວາມພ້ອມດ້ານຕ່າງໆ ໃນແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ແລະ ລາຍງານກ່ຽວກັບການກະກຽມກອງປະຊຸມ 6 ເດືອນ ແລະ ແຜນການ 6 ເດືອນທ້າຍປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 15 ຈາກທ່ານ ສົມສີ ມະນີນິນ; ຮັບຟັງການຜ່ານບົດສະຫລຸບການເຄື່ອນໄຫວວຽກງານປະຈໍາເດືອນມິຖຸນາ ແລະ ທິດທາງແຜນການປະຈໍາເດືອນກໍລະກົດ 2022 ຂອງຄະນະປະຈໍາ ສພຂ ຈາກທ່ານ ທິບພະສອນ ສາມາເລີກ ເລຂາທິການ ສພຂ. ຈາກນັ້ນ, ບັນດາທ່ານຜູ້ແທນກອງປະຊຸມໄດ້ປະກອບຄໍາຄິດເຫັນຕໍ່ເນື້ອໃນທີ່ນໍາມາຄົ້ນຄວ້າ ຢ່າງມີຈຸດສຸມ.

ໃນຕອນທ້າຍ, ທ່ານ ແກ້ວລັດຕະນະ ສີຫາວົງ ໄດ້ມີຄໍາເຫັນ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍເຊີຍຕໍ່ບັນດາທ່ານໃນຄະນະປະຈໍາ ສພຂ ໃນການຊີ້ນໍານໍາພາການຈັດຕັ້ງປະຕິບັດວຽກງານໃນໄລຍະປະຈໍາການ ຊ່ວງປະທານ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເຫັນໄດ້ຜົນສໍາເລັດຫລາຍດ້ານ ໂດຍສະເພາະການກະກຽມຄວາມພ້ອມດ້ານຕ່າງໆ ໃນແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II ພ້ອມທັງເນັ້ນໃຫ້ບັນດາທ່ານຜູ້ແທນກອງປະຊຸມຈົ່ງສືບຕໍ່ຈັດຕັ້ງປະຕິບັດວຽກງານທີ່ຍັງຄົງຄ້າງໃຫ້ມີຜົນສໍາເລັດຕາມແຜນການທີ່ກໍານົດໄວ້.

(ສົມວິຈິດ ໄຊມົນຕີ)

# ລາຍງານຄວາມພ້ອມໃນການກະກຽມ ແລະ ດໍາເນີນກອງປະຊຸມສະໄໝສາມັນເທື່ອທີ 3



(ສພຊ) ຕອນເຊົ້າວັນອັງຄານ, ວັນທີ 19 ກໍລະກົດ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ, ບັນດາອະນຸກໍາມະການໄດ້ລາຍງານຄວາມພ້ອມໃນການກະກຽມ ແລະ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ອຸດົມໄຊ ຊຸດທີ II ຕໍ່ປະທານ ສພຂ ໂດຍການເປັນປະທານຂອງທ່ານ ຄໍາດີ ວົງລ້ອມ ປະທານ ສພຂ, ມີບັນດາທ່ານຮອງປະທານ ສພຂ, ປະທານຄະນະກໍາມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ວິຊາການພາຍໃນ ສພຂ ເຂົ້າຮ່ວມ.

ກອງປະຊຸມບັນດາທ່ານຫົວໜ້າອະນຸກໍາມະການໄດ້ລາຍງານການກະກຽມເນື້ອໃນ ແລະ ຄວາມພ້ອມຂອງການດໍາເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ອຸດົມໄຊ ຊຸດທີ II ບົນພື້ນຖານການກະກຽມແມ່ນສໍາເລັດໂດຍພື້ນຖານ. ຈາກນັ້ນ, ປະທານກອງປະຊຸມໄດ້ມີທິດຊີ້ນໍາຕໍ່ກອງປະຊຸມ ແລະ ຜູ້ເຂົ້າຮ່ວມໄດ້ປະກອບຄໍາຄິດຄໍາເຫັນ ແລະ ມີຄໍາສະເໜີຕໍ່ກອງປະຊຸມຢ່າງກົງໄປກົງມາ ແລະ ຖອດຖອນບົດຮຽນໃນການກະກຽມກອງປະຊຸມຄັ້ງຜ່ານມາ, ເຫັນວ່າມີຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຄວນມີວິທີທາງແກ້ໄຂຄືແນວໃດ ເພື່ອເຮັດໃຫ້ການກະກຽມດໍາເນີນກອງປະຊຸມໃຫ້ສໍາເລັດຕາມລະດັບຄາດໝາຍ ແລະ ທັນຕາມກໍານົດເວລາ.

ຕອນທ້າຍ, ປະທານກອງປະຊຸມ ໄດ້ສະແດງຄວາມຊົມເຊີຍຕໍ່ຄະນະຮັບຜິດຊອບໃນການກະກຽມດ້ານຕ່າງໆສໍາເລັດເບື້ອງຕົ້ນ ແລະ ໄດ້ເນັ້ນໜັກໃຫ້ພະນັກງານ-ລັດຖະກອນ ທີ່ຢູ່ໃນອະນຸກໍາມະການທີ່ຖືກແຕ່ງຕັ້ງໃຫ້ເອົາໃຈໃສ່ໃນການປະສານສົມທົບກັບບັນດາອະນຸກໍາມະການພາຍໃນ, ພະແນກການທີ່ກ່ຽວຂ້ອງໃຫ້ລະອຽດຄົບຖ້ວນ, ຂໍທິດຊີ້ນໍາຈາກຫົວໜ້າອະນຸກໍາມະການຢ່າງເປັນປົກກະຕິ ແລະ ປະຕິບັດໜ້າທີ່ຕົນຕາມການໝອບໝາຍໃຫ້ສໍາເລັດ.

(ແສງພອນ ອິນນະລົງ)

# ສພຂ ຊຽງຂວາງ ໃຫ້ຄຳປຶກສາທາງດ້ານກົດໝາຍແກ່ປະຊາຊົນ 188 ເທື່ອຄົນ

ໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX, ທ່ານ ບຸນໂຮມ ເທດທານີ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 9, ປະທານສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນວ່າ: ແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ IX ຮອດປະຈຸບັນ, ຄະນະ ສສຊ ແຫ່ງຊາດປະຈຳເຂດເລືອກຕັ້ງ ກໍຄື ສພຂ ໄດ້ເອົາໃຈໃສ່ປະຕິບັດສິດ, ໜ້າທີ່ຂອງຕົນຕາມ 3 ພາລະບົດບາດ ທີ່ກຳນົດໄວ້ໃນກົດໝາຍດ້ວຍຄວາມຮັບຜິດຊອບສູງ ເຊິ່ງສະແດງອອກມີຜົນສຳເລັດຄື:

**ພາລະບົດບາດດ້ານນິຕິບັນຍັດ, ນິຕິກຳ:** ໄດ້ຕັ້ງໜ້າຄົ້ນຄວ້າ, ຈັດຕັ້ງການທາບທາມ ແລະ ເຂົ້າຮ່ວມກອງປະຊຸມທາງໄກ ໃນການປະກອບຄຳເຫັນໃສ່ບັນດາຮ່າງກົດໝາຍທີ່ສະພາແຫ່ງຊາດ ແລະ ບັນດາກະຊວງທີ່ກ່ຽວຂ້ອງສົ່ງໃຫ້ທ້ອງຖິ່ນ ຈຳນວນ 29 ສະບັບ; ຊຸກຍູ້ບັນດາຂະແໜງການທີ່ກ່ຽວຂ້ອງ ຮ່າງນິຕິກຳໃຕ້ກົດໝາຍຈຳນວນ 2 ສະບັບ, ສຳເລັດແລ້ວ 1 ສະບັບ, ກຳລັງປັບປຸງ 1 ສະບັບ; ອອກມະຕິວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງບັນດາຄະນະກຳມະການ, ຄະນະເລຂາທິການ ຈຳນວນ 7 ສະບັບ; ປັບປຸງມະຕິວ່າດ້ວຍການພົບປະປະຊາຊົນ; ມະຕິວ່າດ້ວຍລະບຽບການດຳເນີນກອງປະຊຸມ ສພຂ; ມະຕິວ່າດ້ວຍການຮັບຮອງເອົາກົງຈັກເສນາທິການຂອງສະພາປະຊາຊົນແຂວງ; ສົມທົບອົງການປົກຄອງແຂວງ ຈັດຕັ້ງການໂຮມຊຸມນຸມຊົມພິທີສະເຫລີມສະຫລອງວັນສ້າງຕັ້ງລັດຖະທຳມະນູນແຫ່ງຊາດ ຄົບຮອບ 30 ປີ; ຖະແຫລງຂ່າວຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝວິສາມັນເທື່ອທີ 1 ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ຈັດຕັ້ງການເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າຮັບຮູ້ຢ່າງທົ່ວເຖິງ. ນອກຈາກນັ້ນ, ເວລາເຄື່ອນໄຫວວຽກງານ, ລົງຕິດຕາມກວດກາໄດ້ເຜີຍແຜ່ບາງກົດໝາຍທີ່ກ່ຽວຂ້ອງ ກັບແຕ່ລະຂົງເຂດວຽກງານໃຫ້ພະນັກງານ, ທະຫານ, ຕຳຫລວດ ແລະ ພໍ່ແມ່ປະຊາຊົນ ໄດ້ຮັບຮູ້, ເຊື່ອມຊຶມ ແລະ ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍຢ່າງເຂັ້ມງວດ.



**ພາລະບົດບາດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ, ຂອງທ້ອງຖິ່ນ:** ເອົາໃຈໃສ່ປະຕິບັດສິດ ແລະ ໜ້າທີ່ຂອງຕົນ ໃນການຕົກລົງບັນຫາພື້ນຖານສຳຄັນຂອງຊາດ ແລະ ຂອງທ້ອງຖິ່ນ ດ້ວຍຄວາມຮັບຜິດຊອບສູງ, ຮັບປະກັນຄວາມຖືກຕ້ອງສອດຄ່ອງກັບກົດໝາຍ, ຜົນປະໂຫຍດລວມຂອງຊາດ ແລະ ປະຊາຊົນບັນດາເຜົ່າພາຍໃນແຂວງຊຽງຂວາງ ເປັນຕົ້ນໃນການເຂົ້າຮ່ວມກອງປະຊຸມແຕ່ລະສະໄໝຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ໄດ້ປະກອບຄຳຄິດເຫັນໃສ່ບັນຫາສຳຄັນພື້ນຖານຂອງຊາດ ໂດຍສະເພາະແມ່ນກົງຈັກຂອງ ສພຊ, ກົງຈັກຂອງລັດຖະບານ, ວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດກ່ຽວກັບການແກ້ໄຂບັນຫາຢາເສບຕິດ, ກົງຈັກລັດຂັ້ນແຂວງ ແລະ ບັນດາມະຕິ ທີ່ໄດ້ຮັບຮອງຢູ່ໃນກອງປະຊຸມຂອງສະພາປະຊາຊົນຂັ້ນແຂວງແຕ່ລະຄັ້ງ, ການປະກອບຄຳເຫັນໃສ່ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ; ສົມທົບກັບພາກສ່ວນກ່ຽວຂ້ອງ ສ້າງຂໍ້ຕົກລົງວ່າດ້ວຍການປະສານງານຮ່ວມລະຫວ່າງ ສພຂ ແລະ ອົງການປົກຄອງແຂວງຊຽງຂວາງ, ຄະນະເລຂາທິການ ແລະ ຫ້ອງວ່າການແຂວງ; ເຂົ້າຮ່ວມກອງປະຊຸມປຶກສາຫາລືວຽກງານອື່ນໆ ທີ່ສຳຄັນປົ່ນອ້ອມພາຍໃນແຂວງ.

**ພາລະບົດບາດດ້ານການຕິດຕາມກວດກາ:** ສົມທົບຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ພາກສ່ວນກ່ຽວຂ້ອງຂອງແຂວງ ໃນການຕິດຕາມກວດກາ ເປັນຕົ້ນແມ່ນກວດກາຜົນກະທົບຈາກການສ້າງເຂື່ອນໄຟຟ້າ ແລະ ຜົນກະທົບຈາກໄພພິບັດນ້ຳຖ້ວມ, ຕິດຕາມຊຸກຍູ້ບໍລິສັດທີ່ໄດ້ຮັບອະນຸຍາດການລົງທຶນຂຸດຄົ້ນແຮ່ຄຳ; ສົມທົບກັບຄະນະນຳຂອງ ສພຊ ລົງເຄື່ອນໄຫວ, ຕິດຕາມກວດກາໂຄງການກໍ່ສ້າງເຂື່ອນໄຟຟ້າ, ຕິດຕາມກວດກາ, ຊຸກຍູ້ການແກ້ໄຂບັນດາຄຳສະເໜີຂອງການນຳເມືອງ ແລະ ປະຊາຊົນເມືອງຢູ່ບັນດາເມືອງ; ຕິດຕາມຊຸກຍູ້ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຸ້ຍຸງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດຢູ່ບັນດາພະແນກການອ້ອມຂ້າງແຂວງ ແລະ ບັນດາເມືອງ; ເຂົ້າຮ່ວມຕິດຕາມກວດກາ ແລະ ເກັບກຳຂໍ້ມູນກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບທີ່ຕິດພັນກັບວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ; ເຂົ້າຮ່ວມຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາຄາດໝາຍຂະແໜງການສຶກສາທິການ ແລະກິລາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນໃນທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະການຈັດຕັ້ງປະຕິບັດວຽກງານກິລາ-ກາຍຍະກຳພາຍໃນແຂວງຊຽງຂວາງ; ສົມທົບກັບສະພາປະຊາຊົນແຂວງຊຸກຍູ້, ຕິດຕາມກວດກາການແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຈຳນວນ 88 ເລື່ອງ, ແກ້ໄຂແລ້ວ 80 ເລື່ອງ, ກຳລັງຄົ້ນຄ້ວາ 8 ເລື່ອງ, ຕ້ອນຮັບ ແລະ ໃຫ້ຄຳປຶກສາທາງດ້ານກົດໝາຍແກ່ປະຊາຊົນຈຳນວນ 103 ຄັ້ງ, ມີ 188 ເທື່ອຄົນ ຍິງ 45 ເທື່ອຄົນ.

ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 9 ຍັງໃຫ້ຮູ້ຕື່ມວ່າ: ແຕ່ກອງປະຊຸມປະຖົມມະລຶກຂອງ ສພຊ ຊຸດທີ IX ຮອດປັດຈຸບັນ ສພຂ ສົມທົບກັບບັນດາ ສສຂ ຈັດຕັ້ງປະຕິບັດການລົງເຜີຍແຜ່ ແລະ ຈັດຕັ້ງປະຕິບັດລັດຖະທຳມະນູນ ໃຫ້ຕິດພັນກັບກົດໝາຍ, ລະບຽບການ ເປັນຕົ້ນແມ່ນສົມທົບກັບພາກສ່ວນກ່ຽວຂ້ອງລົງໂຄສະນາເຜີຍແຜ່ກົດໝາຍ, ພາລະບົດບາດຂອງ ສພຂ ໃນໂຄງການສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນ; ຈັດຕັ້ງການເຝິກອົບຮົມ ແລະ ອຳນວຍຄວາມສະດວກໃຫ້ແກ່ ສສຊ, ສສຂ ໃນການເຂົ້າຮ່ວມກອງປະຊຸມເຝິກອົບຮົມ ເພື່ອສ້າງຄວາມເຂັ້ມແຂງໃນດ້ານຕ່າງໆ ເຊັ່ນ: ທັກສະການເປັນຜູ້ນຳ ແລະ ການປະກອບຄຳເຫັນໃຫ້ແກ່ ສສຊ-ສສຂ ເພື່ອສ້າງຄວາມເຂັ້ມແຂງໃນການໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳຕ່າງໆ ໃຫ້ຮັດກຸມ ແລະ ຮັບປະກັນຄຸນນະພາບ, ສາມາດຈັດຕັ້ງປະຕິບັດໄດ້; ໂຄສະນາເຜີຍແຜ່ກົດໝາຍທີ່ກ່ຽວພັນກັບສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ, ບັນດານິຕິກຳທີ່ສະພາປະຊາຊົນແຂວງຮັບຮອງ ຜ່ານລາຍການວິທະຍຸ, ໂທລະພາບຂອງແຂວງເພື່ອໃຫ້ພະນັກງານ, ທະຫານ, ຕຳຫລວດ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າເປັນປົກກະຕິຈຳນວນ 72 ຄັ້ງ; ປະຕິບັດການໂຄສະນາເຜີຍບັນດາກົດໝາຍກ່ຽວຂ້ອງ ຕິດພັນກັບການລົງເຜີຍແຜ່ຜົນສຳເລັດກອງປະຊຸມແຕ່ລະສະໄໝຂອງ ສພຊ ແລະ ສພຂ ຢູ່ບັນດາພະແນກການກົມກອງອ້ອມຂ້າງແຂວງ ແລະ ບັນດາເມືອງ ໄດ້ທັງໝົດ 171 ຈຸດ, 59 ກົມກອງ, 112 ບ້ານ, ມີຜູ້ເຂົ້າຮ່ວມທັງໝົດ 9.489 ຄົນ ຍິງ 3.598 ຄົນ, ໄດ້ຮັບຟັງຄຳສະເໜີທັງໝົດ 948 ເລື່ອງ, ສສຊ, ສສຂ ສົມທົບກັບການນຳເມືອງອະທິບາຍ, ຊີ້ແຈງແລ້ວ 486 ເລື່ອງນຳມາຄົ້ນຄົ້ນຄ້ວາ, ພິຈາລະນາ ແລະ ນຳສະເໜີພາກສ່ວນທີ່ກ່ຽວຂ້ອງ 444 ເລື່ອງ, ຄຳສະເໜີທີ່ ສສຊ-ສສຂ ຮັບມາຄົ້ນຄວ້າພິຈາລະນາ 18 ເລື່ອງ; ພ້ອມນີ້, ເພື່ອເປັນການຮັບປະກັນການຈັດຕັ້ງປະຕິບັດວຽກງານຢູ່ຂັ້ນພື້ນຖານ, ທ້ອງຖິ່ນ ສພຂ ໄດ້ນຳເອົາຄອມພິວເຕີ ແລະ ປິນເຕີຈຳນວນ 7 ຊຸດ ມູນຄ່າ 63,8 ລ້ານກວ່າກີບມອບໃຫ້ຄະນະຊ່ວຍວຽກຢູ່ບັນດາເມືອງ ແລະ ໄດ້ພົວພັນກັບພາກສ່ວນກ່ຽວຂ້ອງ ລະດົມເຄື່ອງຊ່ວຍເຫລືອທີ່ຈຳເປັນໄປມອບໃຫ້ອົງການປົກຄອງບ້ານ ແລະ ຄອບຄົວປະຊາຊົນ ເປັນຕົ້ນແມ່ນໂທລະໂຄ່ງ, ຜ້າອັດປາກ, ຢາປົວພະຍາດ ແລະ ເຄື່ອງນຸ່ງຫົ່ມ ລວມມູນຄ່າຫລາຍກວ່າ 80,31 ລ້ານກີບ.

ໂອກາດດັ່ງກ່າວ, ທ່ານ ບຸນໂຮມ ເທດທານີ ຍັງໄດ້ກ່າວວ່າ: ຜ່ານການເຄື່ອນໄຫວຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 9 ກໍຄືສະພາປະຊາຊົນຂັ້ນແຂວງ ໃນນາມເປັນຕົວແທນສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າແຂວງຊຽງຂວາງ ເຫັນໄດ້ວ່າການເຄື່ອນໄຫວແຕ່ໄລຍະຜ່ານມາຮອດປັດຈຸບັນ ໄດ້ມີຜົນເຮັດໃຫ້ບັນດາພະນັກງານ, ທະຫານ, ຕຳຫລວດ, ນັກສຶກສາ, ກຳມະກອນ, ຊາວຜູ້ອອກແຮງງານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ຊາວແຂວງຊຽງຂວາງ ຮັບຮູ້ ແລະ ເຂົ້າໃຈພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສສຊ ກໍຄື ສພຂ ໄດ້ດີພໍສົມຄວນ ເຊິ່ງຄາດວ່າຈະດີຂຶ້ນເລື້ອຍໆໃນຕໍ່ໜ້າ.

## ເຊັນບົດບັນທຶກການປະສານງານ ລະຫວ່າງ ຄສຜງ ຫລວງພະບາງ ຮ່ວມກັບພະແນກພະລັງງານ ແລະ ບໍ່ແຮ່ແຂວງ



(ສພຊ) ໃນຕອນບ່າຍຂອງວັນທີ 15 ກໍລະກົດ 2022 ຢູ່ທີ່ຫ້ອງປະຊຸມຂອງພະແນກພະລັງງານ ແລະ ບໍ່ແຮ່ແຂວງຫລວງພະບາງ ໄດ້ຈັດພິທີເຊັນບົດບັນທຶກການປະສານງານ ລະຫວ່າງຄະນະກຳມະການເສດຖະກິດແຜນການ ແລະ ການເງິນ (ຄສຜງ) ສະພາປະຊາຊົນແຂວງຫລວງພະບາງ ກັບພະແນກພະລັງງານ ແລະ ບໍ່ແຮ່ແຂວງ ໂດຍການການລົງນາມຂອງທ່ານ ສົມພອນ ສິອຸດົມພັນ ຮອງປະທານ ສພຂ ທັງເປັນປະທານ ຄສຜງ ແລະ ທ່ານ ສົມໄຈ ວັນນະສີ ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ແຂວງ; ມີຮອງປະທານ ຄສຜງ, ຮອງເລຂາທິການສະພາປະຊາຊົນແຂວງ; ຮອງຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານຂອງສອງພາກສ່ວນເຂົ້າຮ່ວມຢ່າງພ້ອມພຽງ.

ພິທີເຊັນບົດບັນການປະສານງານຄັ້ງນີ້ ແມ່ນເພື່ອເປັນພື້ນຖານ, ບ່ອນອີງ ແລະ ເປັນໃຈກາງການປະສານງານ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງ ຄສຜງ ສະພາປະຊາຊົນແຂວງ ກັບພະແນກພະລັງງານ ແລະ ບໍ່ແຮ່ແຂວງ ໃນການຈັດຕັ້ງປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ມີປະສິດທິພາບ, ປະສິດທິຜົນ, ວ່ອງໄວ ແລະ ຮັດກຸມ ພ້ອມທັງເພີ່ມທະວີພາລະບົດບາດການຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ລະບຽບການ ໃນການເຄື່ອນໄຫວວຽກງານຂອງສອງພາກສ່ວນ ໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້.

ເນື້ອໃນຂອງບົດບັນທຶກການປະສານງານດັ່ງກ່າວ ປະກອບມີ: 3 ໝວດ, 9 ມາດຕາ ເຊິ່ງມີເນື້ອໃນລະອຽດຄົບຖ້ວນ ເປັນຕົ້ນແມ່ນຈຸດປະສົງ, ຫລັກການປະສານງານ, ເນື້ອໃນ, ຂັ້ນຕອນ, ວິທີການປະສານງານ ແລະ ການຈັດຕັ້ງປະຕິບັດ.

(ນາງ ຈັນທິມາ ສໍພັນໄຊແກ້ວ)

## ສພຂ ຫລວງນ້ຳທາ ຫາລືກ່ຽວກັບຮ່າງຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງສິ່ງເສດເຫລືອ



(ສພຊ) ຕອນເຊົ້າຂອງວັນທີ 14 ກໍລະກົດ 2022 ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຄຍປປ ສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ຮ່ວມກັບພະແນກຊັບພະກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຫລວງນ້ຳທາ ໄດ້ເປີດກອງປະຊຸມປຶກສາຫາລືກ່ຽວກັບຮ່າງຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງສິ່ງເສດເຫລືອ ທີ່ຫ້ອງປະຊຸມຂອງ ສພຂ ຫລວງນ້ຳທາ ໂດຍການເປັນປະທານຂອງທ່ານ ຈັນທະສຸລິນ ໝັ້ນປະກິດ ປະທານ ຄຍປປ; ເຂົ້າຮ່ວມມີບັນດາທ່ານຜູ້ຮັບຜິດຊອບການສ້າງຮ່າງຂໍ້ຕົກລົງຂອງເຈົ້າແຂວງຈາກພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ລັດຖະກອນທີ່ກ່ຽວຂ້ອງເຂົ້າຮ່ວມທັງໝົດ 13 ທ່ານ.

ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສິ່ງເສດເຫລືອແມ່ນໄດ້ກຳນົດຫລັກການ, ລະບຽບ ມາດຕະການໃນການຄຸ້ມຄອງສິ່ງເສດເຫລືອ ພາຍໃນແຂວງ ເພື່ອເປັນການປົກປັກຮັກສາ, ຟື້ນຟູ ບູລະນະສິ່ງແວດລ້ອມໃຫ້ມີຄວາມສວຍສົດງົດງາມ, ຕົວເມືອງສະອາດງາມຕາ, ມີອາກາດບໍລິສຸດ ແລະ ປາສະຈາກການຖິ້ມສິ່ງເສດເຫລືອຊະຊາຍ, ເພື່ອຫລຸດຜ່ອນຜົນກະທົບຕໍ່ຊີວິດ, ສຸຂະພາບຄົນ, ສັດ, ພືດ ແລະ ລະບົບນິເວດ ເຊິ່ງຮ່າງຂໍ້ຕົກລົງສະບັບດັ່ງກ່າວມີທັງໝົດ 7 ໝວດ, 28 ມາດຕາ.

ໃນກອງປະຊຸມໄດ້ພ້ອມກັນປະກອບຄຳເຫັນແລກປ່ຽນທາງດ້ານເນື້ອໃນ, ຂັ້ນຕອນ ໃນແຕ່ລະມາດຕາ ເພື່ອເຮັດໃຫ້ຮ່າງຂໍ້ຕົກລົງສະບັບດັ່ງກ່າວມີເນື້ອໃນຄົບຖ້ວນສົມບູນ, ມີປະສິດທິພາບ ແລະ ປະສິດທິຜົນ, ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ທີ່ຈະໄຂຂຶ້ນໃນຕໍ່ໜ້ານີ້.

(ນັກຂ່າວ ສພຂ ຫລວງນ້ຳທາ)

108 ສາລະ

# ນິໄສຂອງຜູ້ຍິງສະຫລາດ

ໂດຍ: ຕົ້ນແປກ



**1. ເວົ້າມ່ວນ**

ການວາງໂຕ ແລະ ການໃຊ້ຄຳເວົ້າຮູ້ຈັກກາລະເທສະ ເປັນເລື່ອງທຳມະດາງ່າຍໆ ແຕ່ກໍບໍ່ໝາຍວ່າທຸກຄົນຈະເຮັດໄດ້ເຊັ່ນນັ້ນ ຜູ້ຍິງສະຫລາດມັກຈະຮູ້ດີວ່າ ຢູ່ກັບໃຜຄວນຈະເວົ້າແບບໃດ ແລະ ໃຫ້ຄວາມສຳຄັນກັບຄົນທີ່ກຳລັງເວົ້າຢູ່ສະເໝີ.

**2. ໃສ່ໃຈຄົນອື່ນ**

ມີວິທີສະແດງອອກເຖິງການເອົາໃຈໃສ່ ແລະ ໃຫ້ກຽດຄົນອື່ນທີ່ບໍ່ລຶ້ງເຄີຍ ດ້ວຍການເປັນຜູ້ຟັງທີ່ດີ ເພື່ອສັງເກດທັດສະນະຄະຕິ ແລະ ຊອກຫາຊ່ອງທາງເອົາໃຈໃສ່ໃຫ້ຖືກວິທີ ເຖິງຈະເປັນຄົນເວົ້າບໍ່ເກັ່ງ ແຕ່ມີວິທີການສະແດງອອກທີ່ດີ ແລະ ເຮັດໃຫ້ຄົນອ້ອມຂ້າງຮູ້ສຶກມີຄວາມສຳຄັນສະເໝີ.

**3.ບໍ່ຢ້ານຄວາມລຳບາກ**

ບໍ່ທໍ້ຖອຍ ແຕ່ກໍບໍ່ຍອມປ່ອຍຕົວເອງໃຫ້ຊຸດໂຊມ ຮູ້ປັບຕົວໃຫ້ເຂົ້າກັບສະຖານະການ ໂດຍບໍ່ຂັງຕົນເອງໄວ້ໃນກອບໃດກອບໜຶ່ງ;

**4. ຫລີກລ່ຽງວິທີທີ່ທຳຮ້າຍຄົນອື່ນ**

ເຖິງຈະມີຜູ້ສະແດງກິລິຍາບໍ່ດີໃສ່ ກໍຈະບໍ່ຕອບໂຕ້ດ້ວຍວິທີທີ່ບໍ່ດີ ແຕ່ກົງກັນຂ້າມ ຈະພະຍາຍາມເຕືອນດ້ວຍຄວາມສຸພາບ ໃນແບບທີ່ທຳຮ້າຍນ້ຳໃຈກັນນ້ອຍທີ່ສຸດ;

**5. ມັກຊ່ວຍເຫລືອໂຕເອງ**

ນິຍາມຂອງສາວສະຫລາດມັກຈະໝາຍເຖິງການຊ່ວຍເຫລືອເຊິ່ງກັນແລະກັນ ກັບຄົນທີ່ຢູ່ຄຽງຂ້າງ ແລະ ຫາກມີອັນໃດທີ່ຜົາຈະເຮັດໄດ້ ກໍຈະບໍ່ລັງເລທີ່ຈະຊ່ວຍເຫລືອ ແລະພ້ອມທີ່ຈະເຮັດດ້ວຍຕົວເອງ

**6. ໃຫ້ກຽດຄົນອື່ນຢູ່ສະເໝີ**

ການໃຫ້ກຽດຄົນອື່ນ ເປັນສິ່ງສຳຄັນ ທີ່ທຸກຄົນຄວນໄດ້ຮັບຢ່າງເທົ່າທຽມກັນ ເຖິງວ່າຈະມີຕຳແໜ່ງ ຫລື ເປືອກນອກແນວໃດກໍຕາມ ກໍຈະໄດ້ຮັບການໃຫ້ກຽດເທົ່າທຽມກັນຢູ່ສະເໝີ.

**7. ໃຈເຢັນເມື່ອພົບບັນຫາ**

ມີສະຕິພໍທີ່ຈະໄຈ້ແຍກໄດ້ວ່າ ການເວົ້າຄວາມຈິງ ບໍ່ຈຳເປັນຕ້ອງເວົ້າແຮງ ຫລື ອອກໂຕແຮງ ຄວນຈະເກັບຂໍ້ມູນໄວ້ຢ່າງມິດງຽບ ແລະ ຮອບຄອບເສຍກ່ອນ ກ່ອນທີ່ຈະເວົ້າຫຍັງອອກມາ;

**8. ກ້າຍອມຮັບຄວາມຜິດ**

ຖ້າເປັນຝ່າຍຜິດ ກໍບໍ່ລັງເລທີ່ຈະຂໍໂທດໃນທັນທີ ໂດຍບໍ່ມີການບີບນ້ຳຕາ ຫລື ຮຽກຮ້ອງຄວາມສົງສານ.

**9. ທັດສະນະຄະຕິດີ**

ເມື່ອມີການເປີດໂອກາດໃຫ້ສະແດງຄວາມເຫັນໃນເລື່ອງໃດເລື່ອງໜຶ່ງ ບໍ່ວ່າຈະເປັນເລື່ອງທີ່ຖະໜັດ ຫລື ບໍ່ຖະໜັດກໍຕາມ ຄວນສະແດງຄວາມເຫັນແບບເປັນກາງ ແລະຄວນຈະເບິ່ງໃຫ້ຮອບດ້ານເສຍກ່ອນ ເຖິງຈະມີຄວາມເຫັນທີ່ຂັດໃຈກັນແດ່ກໍຕາມ ແຕ່ກໍມີຄວາມສາມາດທີ່ຈະຂັດເກົາໃຫ້ມັນເບົາລົງ ຈົນເປັນຕາໜ້າຟັງ ໂດຍທີ່ບາງຄັ້ງຄົນຟັງອາດຈະບໍ່ຮູ້ຕົວເລີຍວ່າ ກຳລັງຖືກກ່ອມໃຫ້ຄ້ອຍຕາມຢູ່.

**10. ເປັນນັກປັບຕົວທີ່ດີ**

ຄົນສະຫລາດ ຈະບໍ່ຢຸດນິ້ງ ຫລື ຍອມຈຳນົນຕໍ່ບັນຫາໃດໂດຍງ່າຍ ເຊິ່ງໃນຍາມປົກກະຕິ ກໍມັກຈະຊອກຫາຄວາມສຸກໃຫ້ໄດ້ຫລາຍທີ່ສຸດ ແລະ ໃນຍາມທີ່ທຸກ ກໍມັກຈະມີທາງອອກທີ່ຫລາກຫລາຍເຊັ່ນກັນ ເປັນຄົນເບິ່ງໂລກໃນແງ່ດີສະເໝີ;

**11. ບໍ່ປິດກັ້ນຕົວເອງ**

ຜູ້ຍິງສະຫລາດ ມັກຈະເບິ່ງເຫັນວ່າ ການກ້າໄດ້ກ້າເສຍເປັນສິ່ງທີ່ຄຸ້ມຄ່າ ແລະກ້າທີ່ຈະລອງ ຖ້າຫາກຄິດແລ້ວວ່າ ສິ່ງໃດເຮັດໄປແລ້ວດີ ແລະ ຄຸ້ມຄ່າ ແຕ່ກໍບໍ່ລັງເລທີ່ຈະປ່ອຍໂອກາດ ຫລືສິ່ງນັ້ນໄປໂດຍບໍ່ຕ້ອງມານັ່ງເສຍດາຍ ຫລື ເສຍໃຈໃນພາຍຫລັງ ຫາກເຂົາຄິດວ່າສິ່ງນັ້ນບໍ່ຄຸ້ມຄ່າກັບການລົງມືເຮັດ ຫລືການລອງຖືກລອງຜິດ ແລະອາດເວົ້າໄດ້ວ່າ ຜູ້ຍິງສະຫລາດມັກມີໃຈນັກເລງຢູ່ໃນຕົວເອງສະເໝີ.

**12. ບໍ່ອວດສະຫລາດ**

ຄຸນສົມບັດທີ່ສຳຄັນ ເພື່ອສັງເກດໄດ້ວ່າ ຜູ້ຍິງຄົນນັ້ນສະຫລາດແທ້ຫລືບໍ່ ກໍຄືເບິ່ງການສະແດງອອກໃນພາບລວມວ່າ "ມີດີຫຍັງແດ່" ສິ່ງທີ່ມີນັ້ນ ຕ້ອງເປັນສິ່ງທີ່ຄົນອ້ອມຂ້າງສຳຜັດໄດ້ເຖິງຕົວຕົນທີ່ແທ້ຈິງ ໂດຍທີ່ເຈົ້າຂອງບໍ່ຈຳເປັນຕ້ອງອວດ ຫລື ຮຽກຮ້ອງຄວາມສົນໃຈແຕ່ຢ່າງໃດ ຫລື ບໍ່ເຄີຍເປີດປາກບອກໃຜເລີຍແມ່ນແຕ່ໜ້ອຍດຽວ ສະເໜ່ຂອງຜູ້ຍິງຢ່າງໜຶ່ງ ຄືການບໍ່ເປີດເຜີຍຕົວຕົນຫລາຍເກີນໄປ ປຽບດັ່ງເພັດທີ່ມີແສງປະກາຍຢູ່ໃນຕົວ ຫາກຕັ້ງໂຊຢູ່ໃນຕູ້ອີກບໍ່ດົນຄົນກໍເລີ່ມເບື່ອໜ່າຍ ແຕ່ຖ້າເພັດນັ້ນຫາກຖືກຊຸກເຊືອງໄວ້ໃນມູມໃນຫລືບແດ່ ພຽງແຕ່ໃຫ້ປະກາຍເພັດເຕະຕາຜູ້ຄົນເລັກໜ້ອຍ ແລ້ວປ່ອຍໃຫ້ເຂົາຢາກຮູ້ຢາກເຫັນເອງ ຈະເປັນການເພີ່ມຄຸນຄ່າໃນຕົວ.

---

ສາລາກະວີ

# ຍິງລາວສາວເດັ່ນ

\# ໂດຍ: ລູກທາດສາມປາງ

❈ ຍິງລາວດັ່ງເດັ່ນກ້າ ລືຊ່າຊານໄຊ
ຊື່ສຽງໂດ່ງຂະໂຍງໄກ ເກັ່ງງານຄົນຍ້ອງ
ຜິວຜ່ອງພັນເໝືອນແຕ້ມ ແນມນຳເກີນຄ່ອງ
ຍາມເມື່ອຫລິງລຳຈ້ອງ ເຫັນນ້ອງຄ່ຽມຄົມ

❈ ມວຍຜົມດຳແຕ່ງເກົ້າ ສະໄບບ່ຽງແພໄໝ
ເດັ່ນລະໄມແພວພາວ ນຸ່ງງາມຊິງເອ້
ສຸດສະເໜຫາຮູ້ ຍິງລາວດູສະຫງ່າ
ວາຈານວນອິ່ນອ້ອຍ ຫວານຈ້ອຍມ່ວນຫູ

❈ ຄວາມຮູ້ສູງສິ່ງພົ້ນ ທຽມບ່າວຊາຍສະກັນ
ເປັນນາຍພັນຫລາຍຄົນ ດັ່ງດຽວສະເໝີໜ້າ
ວິຊາການເຕັມຂັ້ນ ແວວໄວຂັນແຂ່ງ
ແຊງຊ່ວງຊາຍເລັ່ງດົ້ນ ທັນທ້າວດຸ່ງກາຍ

❈ ວຽກຈັບບາຍກໍ່ສ້າງ ຫລາຍຢ່າງຍິງທຳ
ເປັນການນຳພາພັກ ມາກມາຍຍິງພ້ອມ
ຄຽງຂ້າງຊາຍດອມເຂົ້າ ໜັກເບົາຊວ້ານຊ່ວຍ
ຍິງຂົນຂວາຍກົ່ນໄງ້ ໃຈກ້າເກັ່ງຫານ

❈ ວຽກເຮືອນຊານຄ່ອງແຄ້ວ ເຮັດຢູ່ກະທຳກິນ
ບໍ່ຂອດຄາເຄືອງຂິນ ຊູ່ອັ້ນເຖິງເທົ້າ
ເວົ້າມ່ວນງາມຮອຍຍິ້ມ ຄົນມາຢາມແວ່
ເຫັນແລ້ວຍໍຍົກຍ້ອງ ງາມແທ້ອີ່ຫລີ

❈ ສະຕີລາວເອກອ້າງ ຍຸກໃໝ່ຮຽນສູງ
ຮຸ່ງປັນຍາຄົມແຫລມ ເກັ່ງງານແກມກ້າ
ການສຶກສາໂທຊັ້ນ ປະລິນຍາເອກໃຫຍ່
ມີພົບໄຫວກັ່ນກ້າວ ກຽນກ້ອງວ່ອງໄວ

❈ ຖືວິໄນເຄັ່ງຂໍ້ ວຽກດ່ວນທັນການ
ງານສຳຄັນຍິງລຸຍ ຕໍ່ເຕີມຕາມຕ້ອຍ
ຮີດຄອງລາວແຂນທ້ອຍ ປະເພນີດູເດັ່ນ
ສືບທຳເປັນທີ່ຈັ້ງ ວາງໄວ້ຫວ່າງໃຈ...ງາມເດ!

---



ສຸກສະບາຍຫາຍໂຣຄາ

# ຜົນເສຍຂອງການທີ່ໃຫ້ລູກກິນນົມພຽງຢ່າງດຽວ

ແປ ແລະ ຮຽບຮຽງໂດຍ: ດອກຫຍ້າ



ນົມ ມີປະໂຫຍດຕໍ່ຮ່າງກາຍຂອງເດັກ ເພາະຊ່ວຍເສີມສ້າງກະດູກ ແລະ ຊ່ວຍເພີ່ມຄວາມສູງໃຫ້ແກ່ເດັກໄດ້ເປັນຢ່າງດີ; ນົມມີຄວາມຈຳເປັນຫລາຍຕໍ່ເດັກນ້ອຍທີ່ຢູ່ໃນໄວກຳລັງເຕີບໃຫຍ່ ເຖິງວ່າເດັກຈະກິນນົມແມ່, ນົມຜົງ ຫລື ນົມງົວຕໍ່ຕາມ ຖ້າປ່ອຍໃຫ້ເດັກກິນແຕ່ນົມ ຫລື ດື່ມນົມຫລາຍເກີນໄປ ໂດຍບໍ່ກິນອາຫານເມື່ອເຖິງເກນອາຍຸ ອາດຈະເຮັດໃຫ້ເດັກຂາດສານອາຫານ, ຂາດພະລັງງານ ແລະ ບໍ່ໄດ້ຮັບໄຍອາຫານພຽງພໍ ຈະສົ່ງຜົນຮ້າຍຕໍ່ສຸຂະພາບຮ່າງກາຍຂອງເດັກ.

ບັນຫາທີ່ເດັກນ້ອຍບໍ່ຍອມກິນເຂົ້າ ບາງຄອບຄົວອາດຈະໃຫ້ລູກກິນນົມພຽງຢ່າງດຽວ ເພາະຄິດວ່ານົມສາມາດທົດແທນໄດ້ ແຕ່ຄວາມຈິງແລ້ວ ຮ່າງກາຍຂອງເດັກທີ່ຢູ່ໃນໄລຍະຈະເລີນເຕີບໃຫຍ່ ຈຳເປັນຕ້ອງໄດ້ຮັບສານອາຫານຫລາຍກວ່ານັ້ນ. ດັ່ງນັ້ນ, ຄວນໃຫ້ເດັກນ້ອຍທີ່ອາຍຸຫລາຍກວ່າ 1 ປີ ກິນເຂົ້າໃຫ້ຄົບສາມຄາບ ໂດຍມີອາຫານປະເພດຊີ້ນ, ປາ, ຜັກ ແລະ ໃຫ້ກິນນົມມື້ລະ 2-3 ປ໋ອງ ຫລື ຈອກ ກໍພໍ;

- ຜົນເສຍຂອງການທີ່ໃຫ້ເດັກດື່ມນົມພຽງແຕ່ຢ່າງດຽວ ຄື:

- ຖອກທ້ອງ ເພາະບໍ່ມີເສັ້ນໄຍຈາກຜັກ ແລະ ໝາກໄມ້ ຈຶ່ງເຮັດໃຫ້ອາຈົມແໜ້ນເປັນກ້ອນ ແລະ ບາງຄົນອາດຈະມີອາການຖ່າຍແບບບໍ່ຮູ້ໂຕ ເຮັດໃຫ້ຮູທະວານເປັນບາດແຜ.

- ການຂາດທາດເຫລັກ ຈະເຮັດໃຫ້ຕົນໂຕ ຊີດ-ຈືດ ເຊິ່ງອາດຈະສົ່ງຜົນກະທົບຕໍ່ການສຶກສາດ້ານການພັດທະນາ.

- ການຂາດວິຕາມິນຊີ (C) ຈະເຮັດໃຫ້ເລືອດອອກງ່າຍ ເຊັ່ນ: ເລືອດອອກຕາມຫວ່າງແຂ້ວ, ເນື້ອເຍື່ອກະດູກຜິດປົກກະຕິ ໂດຍສະເພາະບໍລິເວນກະດູກຫົວເຂົ່າ ແລະ ບໍ່ຍອມຍ່າງ ທັງທີ່ຮອດໄວອັນຄວນ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 03 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2021

**ກົດໝາຍ**

**ວ່າດ້ວຍລັດຖະບານ**

**(ສະບັບປັບປຸງ)**

**ໝວດທີ 1**

**ບົດບັນຍັດທົ່ວໄປ**

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງລັດຖະບານ ເພື່ອເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການຕ່າງປະເທດ; ການຄຸ້ມຄອງ, ການນຳໃຊ້ຊັບພະຍາກອນຂອງຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ມີປະສິດ ທິພາບ ແນໃສ່ຮັບປະກັນການປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ໃຫ້ຖືກຕ້ອງ, ເຮັດໃຫ້ປະຊາຊົນ ຮັ່ງມີ ຜາສຸກ, ປະເທດຊາດ ມັ່ງຄັ່ງ ເຂັ້ມແຂງ, ສັງຄົມມີຄວາມສາມັກຄີ ເປັນປຶກແຜ່ນ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

**ມາດຕາ 2 ລັດຖະບານ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນອົງການບໍລິຫານແຫ່ງລັດ ຊຶ່ງຖືກຮັບຮອງໂດຍກອງປະຊຸມສະພາແຫ່ງຊາດ, ມີຄວາມຮັບຜິດຊອບ ຕໍ່ ສະພາແຫ່ງຊາດ ແລະ ປະທານປະເທດ.

**ມາດຕາ 3 ພາລະບົດບາດຂອງລັດຖະບານ**

ລັດຖະບານ ມີ ພາລະບົດບາດຄຸ້ມຄອງບໍລິຫານລັດ ຢ່າງຮອບດ້ານ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ເປັນຕົ້ນດ້ານການເມືອງ, ການປົກຄອງ, ເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ການຄຸ້ມຄອງ, ການນຳໃຊ້ຊັບພະຍາກອນຂອງຊາດ ໃຫ້ມີຄຸນປະໂຫຍດສູງສຸດ ແລະ ການປົກປັກຮັກສາສິ່ງແວດລ້ອມ ຕາມທິດຍືນຍົງ.

**ມາດຕາ 4 (ປັບປຸງ) ຫຼັກການເຄື່ອນໄຫວຂອງລັດຖະບານ**

ການເຄື່ອນໄຫວຂອງລັດຖະບານ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄົາລົບແລະປະຕິບັດລັດຖະທຳມະນູນ, ກົດໝາຍແລະລະບຽບການ;

2. ລວມສູນປະຊາທິປະໄຕສົມທົບກັບການຍົກສູງຄວາມຮັບຜິດຊອບຂອງຫົວໜ້າລັດຖະບານ ແລະ ບັນດາສະມາຊິກລັດຖະບານໂດຍມີພັກປະຊາຊົນປະຕິວັດລາວ ເປັນຜູ້ນຳພາ;

3. ຖືເອົາແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ເປັນກຳລັງແຮງ ແລະ ເອົາການບໍລິການຮັບໃຊ້ປະຊາຊົນເປັນກົກ;

4. ຮັບປະກັນການນຳໃຊ້ວິທີການ ສຶກສາອົບຮົມ, ເສດຖະກິດ ແລະ ບໍລິຫານ ເພື່ອຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ;

5. ກະທັດຮັດ, ທັນສະໄໝ, ປະຢັດ, ເປີດເຜີຍ, ໂປ່ງໃສ, ເດັດຂາດ, ຍຸຕິທຳ ແລະ ສາມາດກວດກາໄດ້;

6. ບໍລິຫານລັດ ຢ່າງມີວິທະຍາສາດ ແລະ ແທດເໝາະກັບຕົວຈິງ.

**ໝວດທີ 2**

**ສິດ ແລະ ໜ້າທີ່ ຂອງລັດຖະບານ**

**ມາດຕາ 5 (ປັບປຸງ) ສິດ ແລະ ໜ້າທີ່ ຂອງລັດຖະບານ**

ລັດຖະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ລັດຖະບັນຍັດ ແລະ ລັດຖະດຳລັດ ຂອງປະທານປະເທດ;

2. ສະເໜີ ຮ່າງກົດໝາຍ ຕໍ່ສະພາແຫ່ງຊາດ, ຮ່າງລັດຖະບັນຍັດ ຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ຮ່າງລັດຖະດຳລັດ ຕໍ່ປະທານປະເທດ;

3. ອອກ ດຳລັດ, ມະຕິ ກ່ຽວກັບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ວິທະຍາສາດ, ເຕັກໂນໂລຊີ, ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ;

4. ກຳນົດ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາແຫ່ງຊາດ ແລ້ວສະເໜີຕໍ່ສະພາແຫ່ງຊາດ;

5. ຄົ້ນຄວ້າ ແລະ ສະເໜີ ກ່ຽວກັບ ການກຳນົດ, ການປ່ຽນແປງ, ການລົບລ້າງ ຫຼື ການຍົກເວັ້ນອັດຕາພາສີ, ສ່ວຍສາອາກອນ ຕໍ່ສະພາແຫ່ງຊາດ, ຄ່າທຳນຽມ ແລະ ຄ່າບໍລິການ ຕໍ່ຄະນະປະຈຳສະພາແຫ່ງຊາດ;

6. ຄົ້ນຄວ້າ ແລະ ສະເໜີ ສະພາແຫ່ງຊາດ ກ່ຽວກັບການ ສ້າງຕັ້ງ, ໂຮມເຂົ້າ, ແຍກອອກ ຫຼື ຍຸບເລີກ ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ການກຳນົດເຂດແດນຂອງ ແຂວງ, ນະຄອນຫຼວງ;

7. ຕົກລົງ ສ້າງຕັ້ງ ຫຼື ຍຸບເລີກ ກົມ ຫຼື ອົງການລັດທຽບເທົ່າກົມ;

8. ຕົກລົງ ສ້າງຕັ້ງ ຫຼື ຍຸບເລີກ ເມືອງ, ເທດສະບານ, ນະຄອນ ແລະ ກຳນົດເຂດແດນ ຂອງເມືອງ, ເທດສະບານ, ນະຄອນ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງກອງປະຊຸມສະພາປະຊາຊົນຂັ້ນແຂວງຮັບຮອງ;

9. ຕົກລົງ ສ້າງຕັ້ງ ຫຼື ຍຸບເລີກ ເຂດເສດຖະກິດພິເສດ;

10. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ທົ່ວສັງຄົມ ໃຫ້ມີສະຕິເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;

11. ຊີ້ນຳ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວ ຂອງບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

12. ຕົກລົງ ໃຫ້ສັນຊາດລາວ, ຖອນສັນຊາດລາວ, ປະສັນຊາດລາວ, ໃຫ້ສັນຊາດລາວຄືນ;

13. ຕົກລົງການເອົາເດັກໄປເປັນລູກລ້ຽງຂອງພົນລະເມືອງຕ່າງປະເທດ;

14. ຕົກລົງ ໃຫ້ຄົນຕ່າງປະເທດ ເປັນພົນລະເມືອງກິດຕິມະສັກ;

15. ຄົ້ນຄວ້າ ແລະ ສະເໜີ ຕໍ່ປະທານປະເທດ ເພື່ອພິຈາລະນາການໃຫ້ອະໄພຍະໂທດ;

16. ຄຸ້ມຄອງພົນລະເມືອງ ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ; ກຳນົດ ແລະ ນຳໃຊ້ ບັນດາມາດຕະການ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ ລວມທັງພົນລະເມືອງລາວ ຢູ່ຕ່າງປະເທດ;

17. ສ້າງ, ເຂົ້າຮ່ວມ, ຕີຄວາມໝາຍ ແລະ ຈັດຕັ້ງປະຕິບັດ ສົນທິສັນຍາ ທີ່ ສປປລາວ ເປັນພາຄີ ແລະ ສັນຍາສາກົນ ໃນລະດັບລັດຖະບານ;

18. ຕິດຕາມ, ກວດກາ ແລະ ຊຸກຍູ້ ການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;

19. ຊີ້ນຳ ແລະ ຕິດຕາມ ກວດກາ ການບໍລິການຮັບໃຊ້ປະຊາຊົນ ແລະ ການແກ້ໄຂຄຳສະເໜີ ຂອງປະຊາຊົນ;

20. ລາຍງານ ການເຄື່ອນໄຫວຂອງຕົນ ຕໍ່ກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ປະທານປະເທດ;

21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 6 (ປັບປຸງ) ສິດ ແລະ ໜ້າທີ່ ຂອງນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ ເປັນຫົວໜ້າລັດຖະບານ, ຮັບຜິດຊອບໂດຍກົງ ຕໍ່ ສະພາແຫ່ງຊາດ ແລະ ປະທານປະເທດ, ຊີ້ນຳ ແລະ ຄຸ້ມຄອງ ການເຄື່ອນໄຫວວຽກງານ ຂອງລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

ນາຍົກລັດຖະມົນຕີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮຽກໂຮມ ແລະ ເປັນປະທານກອງປະຊຸມລັດຖະບານ;

2. ຊີ້ນຳ ແລະ ອຳນວຍຄວບຄຸມວຽກງານຂອງລັດຖະບານ, ການເຄື່ອນໄຫວວຽກງານຂອງ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການອື່ນທີ່ຂຶ້ນກັບລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ;

3. ຊີ້ນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິ ຂອງກອງປະຊຸມສະພາແຫ່ງຊາດ, ຂອງຄະນະປະຈຳສະພາແຫ່ງຊາດ, ຂອງກອງປະຊຸມລັດຖະບານ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາແຫ່ງຊາດ ແລະ ນິຕິກຳຂອງລັດຖະບານ;

4. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ ຕໍ່ສະພາແຫ່ງຊາດເພື່ອພິຈາລະນາຮັບຮອງ;

5. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງລັດຖະມົນຕີ, ຮອງຫົວໜ້າອົງການລັດທຽບເທົ່າກະຊວງ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ;

6. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງກອງປະຊຸມສະພາປະຊາຊົນຂັ້ນແຂວງ ຮັບຮອງ; ມີຄຳເຫັນຕໍ່ການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການແຕ່ງ ຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ກ່ອນນຳສະເໜີ ກອງປະຊຸມສະພາປະຊາຊົນ ຫຼື ຄະນະປະຈຳສະພາປະຊາຊົນ ຂັ້ນແຂວງ ພິຈາລະນາຮັບຮອງ;

7. ເລື່ອນຊັ້ນ ຫຼື ປົດຊັ້ນ ພົນເອກ ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

8. ສະເໜີ ປະທານປະເທດ ເລື່ອນຊັ້ນ ຫຼື ປົດຊັ້ນ ນາຍພົນ ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

9. ສະເໜີ ປະທານປະເທດ ແຕ່ງຕັ້ງ ເອກອັກຄະລັດຖະທູດ ຫຼື ຜູ້ຕາງໜ້າທີ່ມີອຳນາດເຕັມ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປປະຈຳຢູ່ຕ່າງປະເທດ ຫຼື ຮຽກກັບຄືນປະເທດ;

10. ອອກຂໍ້ຕົກລົງ ໃຫ້ສັນຊາດລາວ, ຖອນສັນຊາດລາວ, ປະສັນຊາດລາວ, ໃຫ້ສັນຊາດລາວຄືນ ແລະ ໃຫ້ຄົນຕ່າງປະເທດ ເປັນພົນລະເມືອງກິດຕິມະສັກ;

11. ອອກຂໍ້ຕົກລົງ ການເອົາເດັກໄປເປັນລູກລ້ຽງ ຂອງພົນລະເມືອງຕ່າງປະເທດ;

12. ສະເໜີ ປະທານປະເທດ ເພື່ອພິຈາລະນາການໃຫ້ອະໄພຍະໂທດ;

13. ສະເໜີ ສະພາແຫ່ງຊາດ ພິຈາລະນາ, ຮັບຮອງ ການຍົກເລີກ, ລົບລ້າງ ການເຂົ້າຮ່ວມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນໃນລະດັບລັດ;

14. ສະເໜີ ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ, ຕົກລົງ ໃຫ້ສັດຕະຍາບັນແກ່ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ໃນລະດັບລັດ;

15. ສະເໜີ ປະທານປະເທດ ຕົກລົງມອບ ຫຼື ປະດັບຫຼຽນຄຳແຫ່ງຊາດ, ຫຼຽນກາງດຕິຄຸນ, ຫຼຽນໄຊ, ນາມມະຍົດສູງສຸດແຫ່ງລັດ ຫຼື ຕົກລົງໃຫ້ການຍ້ອງຍໍດ້ວຍຮູບການອື່ນ;

16. ອອກ ດຳລັດ, ຂໍ້ຕົກລົງ ແລະ ຄຳສັ່ງ ກ່ຽວກັບການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ ຂອງລັດຖະບານ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການອື່ນ ທີ່ຂຶ້ນກັບລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ;

17. ງົດປະຕິບັດ, ລົບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການອື່ນ ທີ່ຂຶ້ນກັບລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ທີ່ຂັດກັບກົດໝາຍ ແລະ ນິຕິກຳອື່ນ, ຍົກເວັ້ນຄຳຕົກລົງ ກ່ຽວກັບການດຳເນີນຄະດີ ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

18. ມອບສິດ ໃຫ້ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງຕາງໜ້າລັດຖະບານເຂົ້າຮ່ວມກອງປະຊຸມ, ລົງນາມໃນສັນຍາ ແລະ ສົນທິສັນຍາກັບຕ່າງປະເທດ;

19. ສະຫຼຸບ ແລະ ລາຍງານປະຈຳປີ ກ່ຽວກັບການປະຕິບັດໜ້າທີ່ ຂອງລັດຖະບານ ຕໍ່ ສະພາແຫ່ງຊາດ ແລະ ປະທານປະເທດ;

20. ລາອອກຈາກຕຳແໜ່ງ ເມື່ອເຫັນວ່າ ຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນທາງດ້ານສຸຂະພາບ ຫຼື ດ້ວຍເຫດຜົນອື່ນ;

21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 7 ສິດ ແລະ ໜ້າທີ່ ຂອງຮອງນາຍົກລັດຖະມົນຕີ**

- ຮອງນາຍົກລັດຖະມົນຕີ ຊ່ວຍນາຍົກລັດຖະມົນຕີ ໃນການຊີ້ນຳວຽກງານຂອງ ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ, ຮັບຜິດຊອບວຽກງານໃດໜຶ່ງ ຕາມຂົງເຂດວຽກງານ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ຕາມການມອບໝາຍ ຂອງນາຍົກລັດຖະມົນຕີ.

- ຮອງນາຍົກລັດຖະມົນຕີ ທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ ໃນ

ອ່ານຕໍ່ສະບັບໜ້າ...




**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນຸຄຳ ພົມພັດເສລີ**

7. ສະຖານທີ່ກັກຕົວ ໝາຍເຖິງ ບ່ອນຄວບຄຸມຕົວ ຜູ້ຖືກສົງໄສ ພາຍໃນເວລາທີ່ກົດໝາຍໄດ້ກຳນົດໄວ້;

8. ສະຖານທີ່ກັກຂັງ ໝາຍເຖິງ ບ່ອນຄຸມຂັງຜູ້ຖືກຫາ ໃນໄລຍະດຳເນີນຄະດີກ່ອນຄຳຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດ;

# IMF ຕີລາຄາ ກ່ຽວກັບວິກິດການດ້ານສະບຽງອາຫານທົ່ວໂລກ

ແປ ແລະ ຮຽບຮຽງ: ພົດສະໄໝ ບຸນວິໄລ



ຕາມບົດລາຍງານເສດຖະກິດໂລກ ຫາກໍປະກາດໃນວັນທີ 26 ກໍລະກົດແລ້ວ, ກອງທຶນການເງິນລະຫວ່າງປະເທດ (IMF) ໃຫ້ຂໍ້ສັງເກດວ່າ ໃນຊຸມເດືອນຜ່ານມານີ້, ລາຄາສະບຽງອາຫານທົ່ວໂລກເລີ່ມເປັນປົກກະຕິ, ແຕ່ຍັງຢູ່ໃນລະດັບສູງກວ່າຫລາຍເມື່ອທຽບໃສ່ປີ 2021.

ຕາມການລາຍງານ IMF ໃຫ້ຮູ້ວ່າ, ສາເຫດຕົ້ນຕໍທີ່ພາໃຫ້ເກີດໄພເງິນເຟີ້ດ້ານລາຄາສະບຽງອາຫານທົ່ວໂລກ, ພິເສດແມ່ນລາຄາອາຫານ, ແມ່ນຍ້ອນຜົນກະທົບຂອງວິກິດການຢູ່ໃນທົ່ວໂລກ. ບັນດາຂໍ້ຈຳກັດໃນການສົ່ງອອກຢູ່ບາງປະເທດໄດ້ເຮັດໃຫ້ລາຄາສະບຽງອາຫານທົ່ວໂລກເພີ່ມຂຶ້ນ ເຖິງວ່າ ບາງຂໍ້ຈຳກັດໝົດຜົນສັກສິດແລ້ວກໍ່ຕາມ… ຍ້ອນພະລັງງານ ແລະ ສະບຽງອາຫານແມ່ນປະເພດສິນຄ້າທີ່ຈຳເປັນ, ບໍ່ມີຜະລິດຕະພັນໃດສາມາດທົດແທນໄດ້, ດັ່ງນັ້ນ ລາຄາເພີ່ມຂຶ້ນສູງນັ້ນ ສ້າງຄວາມຫຍຸ້ງຍາກໃຫ້ແກ່ປະຊາຊົນໃນໂລກ. IMF ມີຄວາມກັງວົນຕໍ່ສະພາບການປັດຈຸບັນບໍ່ພຽງແຕ່ນາບຂູ່ເຖິງເສດຖະກິດເທົ່ານັ້ນ ຫາກຍັງຜົນສະທ້ອນເຖິງຄວາມເປັນລະບຽບຮຽບຮ້ອຍທາງສັງຄົມອີກດ້ວຍ.

**ແຫລ່ງຂ່າວ: vovworld.vn**



# ສະມາຊິກລັດຖະບານຟີລິບປິນ ຮັບຟັງການລາຍງານສະພາແຫ່ງຊາດ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ



ອີງຕາມລາຍງານຂ່າວ CRI ໄດ້ລາຍງານວ່າ: ໃນວັນທີ 25 ກໍລະກົດນີ້, ສະມາຊິກລັດຖະສະພາຂອງຟີລິບປິນ ໄດ້ຮັບຟັງທ່ານ ເຟີດີນານ ໂຣມູເດສ ມາກອດ ປະທານາທິບໍດີຟີລິບປິນ ໄດ້ສະເໜີບົດລາຍງານສະພາບແຫ່ງຊາດສະບັບທຳອິດພາຍຫລັງໄດ້ດຳລົງຕຳແໜ່ງວ່າ: ລັດຖະບານຊຸດໃໝ່ຈະສຸມໃສ່ການຟື້ນຟູດ້ານເສດຖະກິດ, ດ້ວຍມາດຕະການປະຕິຮູບ, ຮັບມືກັບສິ່ງທ້າທາຍ ຕ່າງໆໃນດ້ານການພັດທະນາເສດຖະກິດ, ສະຖານະການສາກົນ ແລະ ອື່ນໆ.

ທ່ານ ເຟີດີນານ ໂຣມູເດສ ມາກອດ ໄດ້ສະເໜີບົດລາຍງານສະພາບແຫ່ງຊາດຕໍ່ສະມາຊິກລັດຖະສະພາ ລວມທັງສະພາຕໍ່າ ແລະ ສະພາສູງ ໂດຍທ່ານໃຫ້ຮູ້ວ່າ: ການຊຸກຍູ້ການຟື້ນຟູດ້ານເສດຖະກິດແມ່ນໜ້າທີ່ທຳອິດຂອງລັດຖະບານຊຸດໃໝ່. ທ່ານໄດ້ສະເໜີຕົວເລກເປົ້າໝາຍການເຕີບໂຕດ້ານເສດຖະກິດປີ 2022 ໃຫ້ຢູ່ ໃນລະດັບ 6,5%-7,5%. ພ້ອມນັ້ນ, ຍັງໄດ້ສະເໜີເປົ້າໝາຍການພັດທະນາດ້ານເສດຖະກິດຕ່າງໆ ເຊັ່ນ ການຫລຸດອັດຕາຄວາມທຸກຍາກ, ການຫລຸດໜີ້ສິນ, ຖົມຊຸມການເງິນ, ການຍົກສູງລາຍໄດ້ຂອງພົນລະເມືອງ ສະເລ່ຍຕໍ່ຫົວຄົນ ແລະ ອື່ນໆ.

**ແຫລ່ງຂ່າວ: CRI**






















| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
|---|---|---|---|---|
| ທ່ານ ສີງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ<br>ທ່ານ ວິເສດ ສະແຫວງສຶກສາ<br>ທ່ານ ຄຳວິສັນ ແກ້ວສຸວັນ | ທ່ານ ປອ. ພົດສະໄໝ ບຸນວິໄລ<br>ທ່ານ ຂັນທະວີ ວົງພະຈັນ | ທ່ານ ນາງ ກົງໃຈ ແສງອຳພັນ<br>ທ່ານ ນາງ ສຸພາວັນ ຫອມສະນິດ<br>ທ່ານ ນາງ ປາກາລັກ ພົມມີໄຊ | ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ສົມນຶກ ແກ້ວໄຊຍະຈັກ |